ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເຈົ້າແຂວງ

ເລກທີ 1919 / ຈຂ.ສຂ
ວັນທີ 04 NOV 2020

# ຂໍ້ຕົກລົງ
# ວ່າດ້ວຍ ການກໍານົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ທົ່ວແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ 3 ໝວດທີ 4 ມາດຕາ 20 ຂໍ້ 13;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ເລກທີ 70 / ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ສະບັບເລກທີ 28 /ສພຂ.ສຂ, ລົງວັນທີ 23/10/2020 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການກໍານົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງສະຫວັນນະເຂດ.

## ເຈົ້າແຂວງໆສະຫວັນນະເຂດຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວວຽກງານການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ມີປະສິດທິພາບ ປະສິດທິຜົນສູງ ເພື່ອຮັບປະກັນໃນການຊື້-ຂາຍ, ມອບ-ໂອນ, ການສືບທອດມູນມໍລະດົກ ໃນແຕ່ລະເຂດປະເມີນລາຄາທີ່ດິນ ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງພັກ-ລັດ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ທີ່ດິນປະເພດຕ່າງໆ ເພື່ອນໍາມາຈົດທະບຽນການປ່ຽນແປງສິດນໍາໃຊ້ ພ້ອມທັງປະຕິບັດສິດ ແລະ ພັນທະຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ປະຊາຊົນບັນດາເຜົ່າຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ,ປະຊາທິປະໄຕ ຍຸຕິທໍາ ແລະ ສີວິໄລ.

**ມາດຕາ 2 ການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ການກຳນົດເຂດປະເມີນລາຄາທີ່ດິນແມ່ນ ການກຳນົດລາຄາທີ່ດິນແຕ່ລະເຂດ ແລະ ແຕ່ລະປະເພດ ຢູ່ພາຍໃນແຂວງສະຫວັນນະເຂດ ໂດຍອີງໃສ່ຈຸດພິເສດທາງດ້ານທີ່ຕັ້ງພູມສັນຖານ, ພື້ນຖານໂຄງລ່າງ ແລະ ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

ການກຳນົດປະເມີນລາຄາສິ່ງປຸກສ້າງແມ່ນ ການກຳນົດລາຄາປະເພດອາຄານທີ່ເປັນສິ່ງປຸກສ້າງ ທີ່ນຳໃຊ້ເປັນທີ່ຢູ່ອາໄສ, ສະຖານທີ່ເຮັດວຽກ ແລະ ກິດຈະການດ້ານຕ່າງໆ.

ການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງແມ່ນ ອີງໃສ່ອົງປະກອບ, ທີ່ຕັ້ງ ແລະ ລັກສະນະຂອງດິນ, ປະເພດສິ່ງປຸກສ້າງ, ລະບົບພື້ນຖານໂຄງລ່າງ, ການພັດທະນາທີ່ດິນ ແລະ ຄຸນນະພາບຂອງທີ່ດິນ.

**ມາດຕາ 3 ອະທິບາຍຄຳສັບ**

1. ທີ່ດິນ ໝາຍເຖິງພື້ນແຜ່ນດິນຢູ່ໃນເຂດແດນຂອງ ສປປ ລາວ ຊຶ່ງປະກອບດ້ວຍໜ້າດິນ, ພື້ນດິນ, ໜ້ານ້ຳ, ນ່ານນ້ຳ, ພູ, ຜາ, ເກາະດອນ, ເປັນຊັບພະຍາກອນອັນຕົ້ນຕໍຂອງຊາດ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງ, ເປັນປັດໄຈສຳຄັນໃນການຜະລິດ, ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແຫ່ງຊາດ ແລະ ທ້ອງຖິ່ນ;
2. ສິ່ງປຸກສ້າງຕ່າງໆ ໝາຍເຖິງອາຄານທີ່ໃຊ້ເປັນທີ່ຢູ່ອາໄສ, ສະຖານທີ່ເຮັດວຽກງານ ຫຼື ກິດຈະການດ້ານຕ່າງໆເຊັ່ນ: ດ້ານສາທາລະນະສຸກ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສຶກສາ, ວັດທະນະທຳ-ສັງຄົມ, ສາສະໜາ, ກິລາ, ທຸລະກິດການຄ້າ, ອຸດສະຫະກຳ, ກະສິກຳ ແລະ ອື່ນໆ;
3. ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ໝາຍເຖິງການບັນທຶກທຸກການເຄື່ອນໄຫວ, ການປ່ຽນແປງກ່ຽວກັບສິດນຳໃຊ້ທີ່ດິນ ເຂົ້າໃສ່ປື້ມຈົດທະບຽນນິຕິກຳ;
4. ການຈົດທະບຽນນິຕິກຳກ່ຽວກັບການເຄື່ອນໄຫວສິດນຳໃຊ້ທີ່ດິນ ໝາຍເຖິງການບັນທຶກ ແລະ ຢັ້ງຢືນໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນ ເອົາສິດດັ່ງກ່າວຂອງຕົນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ສະຖາບັນການເງິນໃດໜຶ່ງ ຕາມເງື່ອນໄຂຂອງສັນຍາ ເປັນຕົ້ນ ສັນຍາຊື້-ຂາຍ, ສັນຍາເຊົ່າ, ສັນຍາຄ້ຳປະກັນ, ສັນຍາຂາຍຝາກ, ການສືບທອດມູນມໍລະດົກຕາມພິໄນກຳ ແລະ ກົດໝາຍ;
5. ທີ່ຕັ້ງ ແລະ ລັກສະນະຂອງດິນ ໝາຍເຖິງຈຸດພິເສດບ່ອນທີ່ດິນຕັ້ງຢູ່, ຂອບເຂດລັກສະນະພື້ນທີ່ດິນເຊັ່ນ: ພຽງ, ໂນນ, ຕ່ຳ, ສູງ, ທິວທັດສະພາບແວດລ້ອມ ແລະ ອື່ນໆ;
6. ການຈົດທະບຽນສິ່ງປຸກສ້າງ ໝາຍເຖິງການບັນທຶກທຸກຂໍ້ມູນຂອງສິ່ງປຸກສ້າງທີ່ຕິດພັນກັບການປ່ຽນແປງ ສິດນຳໃຊ້ທີ່ດິນ ເຂົ້າໃສ່ປື້ມຈົດທະບຽນນິຕິກຳ;
7. ປະເພດສິ່ງປຸກສ້າງ ໝາຍເຖິງແບບຮູບຊົງ, ລັກສະນະຂອງອາຄານ;
8. ລະບົບພື້ນຖານໂຄງລ່າງ ໝາຍເຖິງເງື່ອນໄຂສະດວກເຂົ້າເຖິງຕອນດິນ ແລະ ສິ່ງປຸກສ້າງ ມີຖະໜົນ, ເສັ້ນທາງ, ລະບົບສາທາລະນຸປະໂພກ, ໃຫ້ແກ່ຂອບເຂດບໍລິເວນທີ່ໄດ້ຈັດສັນ ແລະ ສ້າງຂຶ້ນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
9. ການພັດທະນາທີ່ດິນ ໝາຍເຖິງການເຮັດໃຫ້ສະພາບ ແລະ ລັກສະນະຂອງດິນປ່ຽນແປງ ມີມູນຄ່າເພີ່ມຂຶ້ນໂດຍມີການລົງທຶນໃສ່ທີ່ດິນເພື່ອເປັນບ່ອນປຸກສ້າງ, ການຜະລິດ, ການດຳເນີນທຸລະກິດ ແລະ ອື່ນໆ;
10. ຄຸນນະພາບຂອງດິນ ໝາຍເຖິງຄວາມອຸດົມສົມບູນຂອງດິນ ເພື່ອຮັບໃຊ້ເປົ້າໝາຍຕ່າງໆຕາມຄວາມເໝາະສົມໃນການພັດທະນາ ຕາມທ່າແຮງຂອງດິນໃນເຂດນັ້ນໆ;
11. ແຜນທີ່ເຂດປະເມີນລາຄາທີ່ດິນ ໝາຍເຖິງພື້ນທີ່ໃນແຜນທີ່ເຊິ່ງກຳນົດໄວ້ ເພື່ອການປະເມີນມູນຄ່າສຳລັບຮັບໃຊ້ໃຫ້ແກ່ການຄິດໄລ່ຄ່າທຳນຽມຈົດທະບຽນມອບ-ໂອນສິດນຳໃຊ້ທີ່ດິນ, ແຜນທີ່ເຂດປະເມີນມູນຄ່າແຕ່ລະສະບັບ ກວມເອົາພື້ນທີ່ໃນຂອບເຂດທົ່ວແຂວງທີ່ໄດ້ມີການສຳຫຼວດ ແລະ ຖືກຈັດ

ແບ່ງອອກເປັນຫຼາຍເຂດຍ່ອຍເອີ້ນວ່າ: ເຂດປະເມີນລາຄາທີ່ດິນ; ຊຶ່ງມີການກຳນົດລະຫັດເປັນຕົວອັກສອນສາກົນ ( A B C D E F G H I J K L M N O );

12. ເຂດປະເມີນລາຄາທີ່ດິນ ໝາຍເຖິງພື້ນທີ່ໃນແຜນທີ່ເຂດປະເມີນລາຄາທີ່ດິນຂອງເມືອງ ຊຶ່ງຖືກຈັດແບ່ງອອກເປັນຫຼາຍເຂດຍ່ອຍ ໂດຍອີງຕາມ 4 ລັກສະນະພື້ນຖານຂອງພື້ນທີ່ຄື:
    - ເຂດໃຈກາງເມືອງ ( ເຂດທຸລະກິດ, ບໍລິການ, ຄ້າຂາຍ, ເຂດສຳນັກງານ, ອົງການຈັດຕັ້ງຕ່າງໆ );
    - ເຂດອ້ອມໃຈກາງເມືອງ ( ເຂດຊຸມຊົນ, ເຂດຂະຫຍາຍຕົວເມືອງ );
    - ເຂດຊານເມືອງ ( ເຂດອຸດສະຫະກຳ, ເຂດທີ່ຢູ່ອາໃສ );
    - ເຂດຊົນນະບົດ ( ເຂດທີ່ຢູ່ອາໃສ, ເຂດກະສິກຳ, ເຂດປ່າໄມ້ ແລະ ອື່ນໆ ).
13. ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ໝາຍເຖິງອັດຕາຄິດໄລ່ທີ່ໄດ້ກຳນົດເຂົ້າໃນຕາຕະລາງສຳລັບທີ່ດິນໃນແຕ່ລະເຂດປະເມີນມູນຄ່າທີ່ດິນ ອັດຕາຄິດໄລ່ດັ່ງກ່າວ ແມ່ນກຳນົດຂຶ້ນບົນພື້ນຖານການເກັບກຳຂໍ້ມູນລາຄາປະກົດຕົວຂອງຕະຫຼາດລາຄາທີ່ດິນຕົວຈິງ ຊຶ່ງມີອົງປະກອບສຳຄັນຂອງທີ່ດິນເຊັ່ນ: ທີ່ຕັ້ງ, ພື້ນຖານໂຄງລ່າງ, ການພັດທະນາ ແລະ ຄຸນນະພາບທີ່ດິນ;
14. ຖະໜົນສາຍຫຼັກ ໝາຍເຖິງເປັນຖະໜົນສາຍສຳຄັນ ຂອງລະບົບການຈາລະຈອນຂອງຕົວເມືອງທັງໝົດ, ເປັນເສັ້ນທາງຫຼວງຂອງປະເທດ, ແຂວງ, ເມືອງ ແລະ ນະຄອນ ທີ່ມີຄວາມໝາຍຄວາມສຳຄັນຕໍ່ ການພັດທະນາເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ ແລະ ຕໍ່ວຽກງານປ້ອງກັນຊາດ-ປ້ອງການຄວາມສະຫງົບ;
15. ຖະໜົນສາຍເຊື່ອມຕໍ່ ໝາຍເຖິງເສັ້ນທາງທີ່ເຊື່ອມຕໍ່ລະຫວ່າງເມືອງກັບເມືອງ, ເມືອງ-ນະຄອນກັບເທດສະບານ, ບ້ານກັບບ້ານ ແລະ ບ້ານໄປຫາສະຖານທີ່ການຜະລິດ ແລະ ການບໍລິການຕ່າງໆຂອງບ້ານ;
16. ຖະໜົນສາຍແຈກ ໝາຍເຖິງເສັ້ນທາງທີ່ແຍກອອກຈາກເສັ້ນເຊື່ອມຕໍ່ ຫຼື ທາງເຂົ້າບ້ານຕ່າງໆ ຫຼື ທາງຮ່ອມ ເຂົ້າຫາບ້ານ ແລະ ເຮືອນໂດຍສະເພາະ, ເປັນຖະໜົນທີ່ເຊື່ອມຕໍ່ ລະຫວ່າງເຂດແດນດິນ, ອາຄານ, ສະຖານທີ່ຕ່າງໆ ກັບຖະໜົນສາຍເຊື່ອມຕໍ່ເຂົ້າດ້ວຍກັນ;
17. ຖະໜົນດັ້ງເດີມ ໝາຍເຖິງເສັ້ນທາງທາງວດັ້ງເດີມໃນຄຸ້ມຕ່າງໆຂອງບ້ານ ຊຶ່ງປະຊາຊົນນຳໃຊ້ມາແຕ່ດັ້ງເດີມ ( ທາງທຳມະຊາດ );
18. ການປະເມີນລາຄາທີ່ດິນຕາມສູດຄິດໄລ່ ໝາຍເຖິງວິທີການປະເມີນລາຄາທີ່ດິນແບບອີງກວ້າງ ທີ່ສ້າງຂຶ້ນບົນພື້ນຖານການເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວຂອງຕະຫຼາດທີ່ດິນ ຊຶ່ງມີແຜນທີ່ເຂດປະເມີນລາຄາທີ່ດິນ, ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ແລະ ສິ່ງປຸກສ້າງ ເພື່ອນຳໃຊ້ເຂົ້າໃນການຄິດໄລ່ຄ່າທຳນຽມຈົດທະບຽນນິຕິກຳກ່ຽວກັບທີ່ດິນ;
19. ການປະເມີນລາຄາແບບສະເພາະ ໝາຍເຖິງການປະເມີນລາຄາທີ່ດິນຕອນໃດໜຶ່ງ ຕາມການຮ້ອງຂໍຂອງພາກສ່ວນກ່ຽວຂ້ອງເປັນແຕ່ລະກໍລະນີ ເປັນຕົ້ນ ການຊື້-ຂາຍ, ແລກປ່ຽນສິດນຳໃຊ້ທີ່ດິນ, ເອົາທີ່ດິນເຂົ້າເປັນຮຸ້ນ ເປັນຫຼັກຊັບຄ້ຳປະກັນ, ການຂາຍຕາມຄຳຕັດສິນຂອງສານ ແລະ ອື່ນໆ;
20. ເຮືອນແບບຊົງລາວ ໝາຍເຖິງເຮືອນທີ່ມີໂຄງສ້າງ ກໍ່ສ້າງດ້ວຍໄມ້ເປັນສ່ວນໃຫຍ່ ( ໄມ້ທີ່ໃຊ້ເປັນໄມ້ເນື້ອແຂງ, ມີລາຄາສູງ), ມີລັກສະນະພື້ນຍົກສູງ, ຝາແອ້ມດ້ວຍໄມ້ປະກົບກັນ ຫຼື ເປັນລູກຟັກ, ຫຼັງຄາຊົງສູງດ້ວຍໄມ້ ຫຼື ດິນຂໍ;
21. ເຮືອນກໍ່ແບບທັນສະໄໝ ໝາຍເຖິງເຮືອນທີ່ມີໂຄງສ້າງມາດຕະຖານ ນຳໃຊ້ເຕັກນິກສູງ, ວັດສະດຸນຳໃຊ້ມີມາດຕະຖານ ແລະ ຊະນິດມີລາຄາແພງ, ມີການຕົກແຕ່ງລວດລາຍພາຍໃນ ແລະ ພາຍນອກ, ເຮືອນມີລັກສະນະພື້ນຊຸດິນເທເບຕົງ, ຝາກໍ່, ຫຼັງຄາມຸງດ້ວຍດິນຂໍ, ກະເບື້ອງ ຫຼື ຊີແຟັກ;

22. ເຮືອນກໍ່ທຳມະດາ ໝາຍເຖິງເຮືອນທີ່ມີແບບໂຄງສ້າງທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ມີເຕັກນິກສູງ, ວັດສະດຸທີ່ນຳໃຊ້ຊະນິດມີລາຄາບໍ່ແພງ, ເຮືອນມີລັກສະນະພື້ນຊູດິນເທເບຕົງ, ຝາກໍ່, ຫຼັງຄາມຸງດ້ວຍສັງກະສີ, ກະເບື້ອງ ຫຼື ຊີແຟັກ;

23. ເຮືອນສອງຊັ້ນ ເຄິ່ງກໍ່ເຄິ່ງໄມ້ ໝາຍເຖິງເຮືອນທີ່ມີໂຄງສ້າງວັດສະດຸປະສົມ ເຊັ່ນ: ເສົາ, ພື້ນຊັ້ນລຸ່ມ, ຊັ້ນລຸ່ມເປັນເບຕົງ, ຝາກໍ່ດ້ວຍດິນຈີ່ ຫຼື ດິນບ່ອກ, ໂຄງສ້າງຊັ້ນເທິງເປັນໄມ້, ຝາແອ້ມດ້ວຍໄມ້, ຫຼັງຄາມຸງດ້ວຍສັງກະສີ ຫຼື ກະເບື້ອງ;

24. ເຮືອນໄມ້ ໝາຍເຖິງເຮືອນທີ່ມີໂຄງສ້າງ ເຮັດດ້ວຍໄມ້ທັງໝົດເປັນຕົ້ນແມ່ນພື້ນ, ຝາແອ້ມດ້ວຍໄມ້, ຫຼັງຄາມຸງດ້ວຍສັງກະສີ ຫຼື ກະເບື້ອງ ມີລັກສະນະການປຸກສ້າງແບບປະສົມປະສານ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພັກ-ລັດ, ເອກກະຊົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ພັດທະນາທີ່ດິນໃຫ້ຖືກຕ້ອງ ຕາມຈຸດປະສົງ ແລະ ເປົ້າໝາຍຢ່າງມີປະສິດທິຜົນສູງ.

ອົງການປົກຄອງແຂວງ ປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກຕ້ອງຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຕາມລະບຽບການ ແລະ ກົດໝາຍກຳນົດໄວ້.

ອົງການປົກຄອງແຂວງ ກຳນົດນະໂຍບາຍອັດຕາສ່ວນຫຼຸດລາຄາຫຼືຫຼຸດຍ່ອນຄົດໄລ່ ທີ່ດິນ ແລະ ສິ່ງປຸກສ້າງ ຕາມສະພາບຄວາມເປັນຈິງ, ເພື່ອສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ແກ່ການນຳໃຊ້, ການພັດທະນາ, ການຫັນສິດນຳໃຊ້ທີ່ດິນແຕ່ລະປະເພດໂດຍສອດຄ່ອງແນວທາງນະໂຍບາຍ ແລະ ກົດໝາຍກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 5 ຫຼັກການເຄື່ອນໄຫວ**

ການເຄື່ອນໄຫວວຽກງານປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງວຽງຈັນ;
2. ສອດຄ່ອງກັບລາຄາຄວາມເປັນຈິງຂອງຕະຫຼາດ ແລະ ມີຄວາມຍຸຕິທຳ;
3. ມີສ່ວນຮ່ວມຂອງປະຊາຊົນ, ຊັ້ນຄົນໃນສັງຄົມ, ການຈັດຕັ້ງ ແລະ ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນການຈົດທະບຽນນິຕິກຳກ່ຽວກັບການປ່ຽນແປງ ແລະ ການເຄື່ອນໄຫວສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ທົ່ວແຂວງສະຫວັນນະເຂດ.

## ໝວດທີ 2
## ເຄື່ອງໝາຍ, ລະຫັດເຂດປະເມີນ, ຕາຕະລາງ
## ກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ, ການກຳນົດອັດຕາສ່ວນຫຼຸດ

**ມາດຕາ 7 ເຄື່ອງໝາຍ**

ເຄື່ອງໝາຍ ຕາມທີ່ໄດ້ກຳນົດໄວ້ໃນແຜນທີ່ເຂດປະເມີນລາຄາທີ່ດິນ ຂອງແຕ່ລະເມືອງ, ນະຄອນແມ່ນກຳນົດເອົາ ຕາມລຳດັບຕົວອັກສອນສາກົນດັ່ງນີ້: A. B. C. D. E. F. G. H. I. J. K. L. M . N. O.

**ມາດຕາ 8 ລະຫັດເຂດປະເມີນ**

ລະຫັດເຂດປະເມີນຂອງ ເມືອງ ແລະ ນະຄອນແມ່ນ ກໍານົດຕາມລໍາດັບຕົວເລກ ສາກົນເລີ່ມແຕ່ 01 ຫາ ຕົວເລກສຸດທ້າຍຕາມເຄື່ອງໝາຍທີ່ກໍານົດໄວ້ໃນ ມາດຕາ 7 ດັ່ງນີ້:

| | | |
|---|---|---|
| A1 ຫາ A23 | ແມ່ນກໍານົດເຂດປະເມີນ | ນະຄອນໄກສອນ ພົມວິຫານ; |
| B1 ຫາ B18 | ແມ່ນກໍານົດເຂດປະເມີນ | ເມືອງອຸທຸມພອນ; |
| C1 ຫາ C9 | ແມ່ນກໍານົດເຂດປະເມີນ | ເມືອງອາດສະພັງທອງ; |
| D1 ຫາ D15 | ແມ່ນກໍານົດເຂດປະເມີນ | ເມືອງພີນ; |
| E1 ຫາ E14 | ແມ່ນກໍານົດເຂດປະເມີນ | ເມືອງເຊໂປນ; |
| F1 ຫາ F10 | ແມ່ນກໍານົດເຂດປະເມີນ | ເມືອງນອງ; |
| G1 ຫາ G11 | ແມ່ນກໍານົດເຂດປະເມີນ | ເມືອງທ່າປາງທອງ; |
| H1 ຫາ H16 | ແມ່ນກໍານົດເຂດປະເມີນ | ເມືອງສອງຄອນ; |
| I1 ຫາ I13 | ແມ່ນກໍານົດເຂດປະເມີນ | ເມືອງຈໍາພອນ; |
| J1 ຫາ J11 | ແມ່ນກໍານົດເຂດປະເມີນ | ເມືອງຊົນນະບູລີ; |
| K1 ຫາ K15 | ແມ່ນກໍານົດເຂດປະເມີນ | ເມືອງໄຊບູລີ; |
| L1 ຫາ L13 | ແມ່ນກໍານົດເຂດປະເມີນ | ເມືອງວິລະບູລີ; |
| M1 ຫາ M8 | ແມ່ນກໍານົດເຂດປະເມີນ | ເມືອງອາດສະພອນ; |
| N1 ຫາ N14 | ແມ່ນກໍານົດເຂດປະເມີນ | ເມືອງໄຊພູທອງ; |
| O1 ຫາ O11 | ແມ່ນກໍານົດເຂດປະເມີນ | ເມືອງພະລານໄຊ. |

## ມາດຕາ 9 ຕາຕະລາງກຳນົດເຂດປະເມີນທີ່ດິນ

ກ. ເຂດປະເມີນລາຄາທີ່ດິນ ຂອງນະຄອນໄກສອນ ພົມວິຫານ ລະຫັດ " A " ມີ 23 ເຂດປະເມີນແຕ່ ( A1-A23 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| A1 | ບ້ານນາແກ, ໜອງເດີ່ນ, ປາກບໍ່ ແລະ ອຸດົມວິໄລ. | 250.000 | 150.000 | 50.000 | 15.000 |
| A2 | ບ້ານນາແກ ແລະ ໂພນສະຫວ່າງເໜືອ. | 300.000 | 160.000 | 70.000 | 15.000 |
| A3 | ບ້ານທົ່ວເມືອງເໜືອ ແລະ ທົ່ວເມືອງໃຕ້. | 500.000 | 160.000 | 70.000 | 20.000 |
| A4 | ບ້ານໂພນສະຫວ່າງເໜືອ ແລະ ໂພນສະຫວ່າງໃຕ້. | 500.000 | 160.000 | 70.000 | 20.000 |
| A5 | ບ້ານໜອງຜື, ອຸດົມວິໄລ, ບຶງວະ, ດົງໝາກຍາງ, ດົງນາຄຳ ແລະ ຫາດອິງຮັງ. | | 50.000 | 30.000 | 15.000 |
| A6 | ບ້ານໂພນສະຫວ່າງເໜືອ, ໂພນສະຫວ່າງໃຕ້, ໜອງຜື ແລະ ບຶງວະ. | | 60.000 | 40.000 | 20.000 |
| A7 | ບ້ານສະໜາມໄຊ, ໂພນສະຫວ່າງໃຕ້,ໂນນສະຫວາດ ແລະ ໜອງຜື. | 250.000 | 100.000 | 40.000 | 15.000 |
| A8 | ບ້ານທົ່ວເມືອງໃຕ້, ທົ່ວເມືອງເໜືອ, ໂພໄຊ ແລະ ໂພນສະຫວ່າງໃຕ້. | | 900.000 | 250.000 | 50.000 |
| A9 | ບ້ານໂພໄຊ, ວຽງສະຫວັນ,ຈອມແກ້ວ, ສຸນັນທາ, ໄຊຍະພູມ, ລັດຕະນະລັງສີເໜືອ, ລັດຕະນະລັງສີໃຕ້, ໄຊຍະມຸງຄຸນ, ທ່າແຮ່ ແລະ ທ່າເມືອງ. | 500.000 | 250.000 | 100.000 | 40.000 |
| A10 | ບ້ານສຸນັນທາ, ໂພນສະຫວ່າງໃຕ້, ໂພນສະຫວ່າງເໜືອ, ລັດຕະນະລັງສີໃຕ້, ລັດຕະນະລັງສີເໜືອ, ນາເລົ່າ, ລາດຊະວົງໄຊ, ໄຊຍະມຸງຄຸນ ແລະ ສະໜາມໄຊ. | 900.000 | 250.000 | 100.000 | 50.000 |
| A11 | ບ້ານນາເລົ່າ, ລາດຊະວົງໄຊ, ໂພນສະຫວ່າງໃຕ້, ສະໜາມໄຊ ແລະ ໂນນສະຫວາດ. | 500.000 | 250.000 | 100.000 | 25.000 |
| A12 | ບ້ານສະພານເໜືອ, ດົງດຳດວນ, ສອນໄຊ, ໄຊຍະມຸງຄຸນ ແລະ ໂນນສະຫວາດ. | 500.000 | 150.000 | 70.000 | 25.000 |
| A13 | ບ້ານສະພານໃຕ້, ໂພນສະຫວັນ, ໂພນສະອາດ, ສອນໄຊ ແລະ ດົງ | 500.000 | 100.000 | 25.000 | 15.000 |

| | | | | | |
|---|---|---|---|---|---|
| | ດ່າດອນ. | | | | |
| A14 | ບ້ານສອນໄຊ, ດົງດ່າດອນ, ໂພນຊາຍ, ນາເຊັງ ແລະ ດອນເຊັງ. | 200.000 | 50.000 | 25.000 | 5.000 |
| A15 | ບ້ານໂພນຊາຍ, ໂນນສະຫວາດ ແລະ ນາເຊັງ. | 200.000 | 50.000 | 25.000 | 5.000 |
| A16 | ບ້ານອຸດົມວິໄລ, ໜອງເດີ່ນ, ແລະ ປາກບໍ່. | 250.000 | 50.000 | 10.000 | 5.000 |
| A17 | ບ້ານນາເຊັງ, ຊອກ, ດອນເຊັງ, ສົ້ມປ່ອຍ, ນາໂພ, ຜັກຂະ, ໂນນອຸດົມ, ຫ້ວຍໄຜ່, ແກ້ງຫີນສູງ, ດົງຄຳຫຼວງ, ຊອກວາງ ແລະ ຫ້ວຍ. | 40.000 | 20.000 | 10.000 | 5.000 |
| A18 | ບ້ານດົງຄຳຫຼວງ, ດົງໝາກຢາງຫ້ວຍ ,ໂພນສິມ, ຍາງສູງ, ໂພນສູງ, ດົງນາຄຳ, ສີ້ງ, ຫາດອິງຮັງ, ຊອກ, ບຶງວະ ,ນາເຊັງ ແລະ ໂນນສະຫວາດ. | 50.000 | 15.000 | 10.000 | 5.000 |
| A19 | ບ້ານສົມສະອາດ, ນາກອຍ, ຊອກວາງ ແລະ ດົງຄຳຫຼວງ. | 40.000 | 15.000 | 10.000 | 5.000 |
| A20 | ບ້ານສີ້ງ, ໂພນສິມ, ຫາດອິງຮັງ, ດົງນາຄຳ, ດົງບັງ ແລະ ໜອງໂກ່ມ. | 50.000 | 15.000 | 10.000 | 5.000 |
| A21 | ບ້ານດົງບັງ, ຍາງໃພສີ, ເຄືອເຂົາກາດ, ໜອງໂກ່ມ, ນາຈະຫຼືດ, ດົງດ່າດອນ, ເລົ່າງາມ, ຂອນແກ່ນ, ຕົ້ນເຜີ້ງ, ໜໍເມືອງ ແລະ ນ້ຳບໍ່. | 50.000 | 15.000 | 10.000 | 5.000 |
| A22 | ບ້ານດອນເຊັງ ແລະ ໂພນສະຫວັນ. | 50.000 | - | 10.000 | 5.000 |
| A23 | ບ້ານໜອງເດີ່ນ, ດົງນາຄຳ, ທ່າຊະໂນ, ນາເຕີຍ, ດົງບັງ, ນ້ຳບໍ່, ໜໍເມືອງ, ບຶງທະເລ ແລະ ທ່າຫົວຊ້າງ. | 50.000 | 15.000 | 10.000 | 5.000 |

ຂ. ເຂດປະເມີນລາຄາທີ່ດິນ ຂອງເມືອງອຸທຸມພອນ ລະຫັດ " B " ມີ 18 ເຂດປະເມີນແຕ່ ( B1-B18 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນ ເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| B1 | ບ້ານໄຊອຸດົມ, ໄຊຍະມຸງຄຸນ, ອຸດົມມີໄຊ, ຈອມເພັດ, ໄຊສົມບູນ, ວົງພັນສີ, ເຊໂນ, ຈະເລີນສຸກ, ມະນີວົງໄຊ ແລະ ຈັນທະລັງສີ. | 120.000 | 50.000 | 30.000 | 10.000 |
| B2 | ບ້ານຈະເລີກສຸກ, ຈັນທະລັງສີ, ສີບຸນເຮືອງ, ສະໜາມໄຊ, ພິນເໜືອ , ພິນໃຕ້, ຫ້ວຍສ້າງທອງ ແລະ | 60.000 | 20.000 | 10.000 | 3.000 |

| | | | | | |
|---|---|---|---|---|---|
| | ຫ້ວຍເໜົ້າ. | | | | |
| B3 | ບ້ານຈອມເພັດ, ສີບຸນເຮືອງ, ພີນເໜືອ, ພີນໃຕ້, ໄຊສີມບຸນ ແລະ ໂຄກ. | 50.000 | - | 10.000 | 3.000 |
| B4 | ບ້ານນາຫາດ, ໄຊຍະມຸງຄຸນ, ໂຄກ ແລະ ຈອມເພັດ. | 50.000 | - | 5.000 | 2.000 |
| B5 | ບ້ານໄຊຍະມຸງຄຸນ, ນາຫາດ, ກາງໂພສີ, ນາຊາຍ ແລະ ໄຊອຸດົມ. | 30.000 | - | 8.000 | 1.000 |
| B6 | ບ້ານສະໜາມໄຊ, ໄຊສະອາດ,ວັງແຄນ, ໜອງ ບົວທອງ, ໂນນໝາກຫຍ້າ, ກຸດແຂ້, ຫ້ວຍເໜົ້າ, ໄຊສະອາດ, ວັງແຄນ, ໜອງບົວທອງ,ໂນນວິໄລ ແລະ ຫ້ວຍສ້າງທອງ. | 30.000 | - | 5.000 | 1.000 |
| B7 | ບ້ານໜອງບົວທອງ, ໂນນວິໄລ, ທົ່ງ, ນາ, ນາຂີ້ເຫຼັກ, ໂພນໝາກຫຍ້າ, ກົບມ້າ ແລະ ນາກະເຊາະ. | 20.000 | 5.000 | 2.000 | 1.000 |
| B8 | ບ້ານນາຈານ,ໂຄກປ່າຫວາຍ ແລະ ໂຄກ. | 15.000 | - | 5.000 | 1.000 |
| B9 | ບ້ານຫ້ວຍເໜົ້າ, ກຸດແຂ້, ນາກະເຊາະ, ທົ່ວຄຳ, ດົງນ້ອຍ, ໂນນສະຫ່ວາງ, ພີນໃຕ້ ແລະ ນາຈານ. | - | 10.000 | 5.000 | 1.000 |
| B10 | ບ້ານໄຊອຸດົມ, ເຊໂນ, ຈະເລີນສຸກ, ໄຊຍະເພັດ, ສະໜາມໄຊ, ໄຊສະອາດ ແລະ ເຫລົ່າໃຫຍ່. | - | 30.000 | 20.000 | 5.000 |
| B11 | ບ້ານໂນນດອກໄມ້, ໜອງອາຮົງນ້ອຍ, ໜອງຄຳແຮດ, ໄຊອຸດົມ, ໂນນນາຄູນ, ແມດ, ເຫລົ່າໃຫຍ່, ໄຊຍະເພັດ ແລະ ວັງແຄນ. | - | 15.000 | 10.000 | 1.000 |
| B12 | ບ້ານແມດ, ໂພນຕາດ, ເຫລົ່າໃຫຍ່, ສະກຸດ, ນາ ,ເອ້, ໜອງແປນ ແລະ ໂນນວິໄລ. | - | - | 5.000 | 1.000 |
| B13 | ບ້ານແມດ, ນາເກັງ, ນາໂພ, ປ່າໜາມ, ນາປົ່ງ, ໂນນອຸດົມ, ໂນນປ່າໄລ່, ດົງທ່າ, ດົງໃນ, ນາຄຳ ແລະ ດົງຂວາງ. | - | - | 3.000 | 1.000 |
| B14 | ບ້ານໂນນນາຄູນ, ໂພນຍານາງ,ອາຮົງ, ໂພນເດື່ອ, ໂພນຕູມ, ນາເກັງ, ເອ້ , ນາທົ່ວຂີວ ແລະ ໂພນສະຫວ່າງ. | - | 10.000 | 5.000 | 1.000 |
| B15 | ບ້ານໄຊອຸດົມ, ໂນນນາຄູນ, ນາທົ່ວຂີວ, ອາຮົງ, ສີມສະອາດ, ຜັກຂະຫຍ່າ, ໂນນດອກໄມ້, ກາງ | - | 20.000 | 10.000 | 1.000 |

| | | | | | |
|---|---|---|---|---|---|
| | ໂພສີ ແລະ ນາຊາຍ. | | | | |
| B16 | ບ້ານນາຊາຍ, ສົມພັດວິໄລ ແລະ ດົງໝາກແງວ. | 25.000 | 15.000 | 5.000 | 1.000 |
| B17 | ບ້ານສົມສະອາດ, ອາຣີງ, ໂພນ ເດື່ອ, ໂພນທັນ, ນາສະໂນດ, ດົງ ໝາກແງວ, ນາຄູ ແລະ ສົມພັດ ວິໄລ. | - | 10.000 | 5.000 | 1.000 |
| B18 | ບ້ານໂນນອຸດົມ, ໂນນປ່າໄລ່, ດົງ ທ່າ, ດົງໃບ, ໜອງແປນ ແລະ ນາ ຄໍາ. | - | 5.000 | 3.000 | 1.000 |

ຄ. ເຂດປະເມີນລາຄາທີ່ດິນ ຂອງເມືອງອາດສະພັງທອງ ລະຫັດ " C " ມີ 9 ເຂດປະເມີນແຕ່ ( C1-C9 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| C1 | ບ້ານດົງເຫັນ ແລະ ຕະບອງເພັດ. | 50.000 | 20.000 | 10.000 | 5.000 |
| C2 | ບ້ານດົງກີໄລ, ພັງໂຮ, ສີວິໄລ , ຫົວເມືອງ, ດົງຂວາງ, ໂພນນິກ ຂຽນ, ຫຼຽນໄຊ ແລະ ວັດທະນະ ສົມບູນ. | 20.000 | 10.000 | 5.000 | 2.000 |
| C3 | ບ້ານດົງເຫັນ, ຕະບອງເພັດ, ໜອງປາກຊ່ອງ, ດອນປ່າໄລ່, ສະພັງແກ້ວ, ໜອງໃສ, ສາມັກຄີ ໄຊ, ປ່າໄລ່, ໂພນງອຍ, ໂພສີ ແກ້ວ ແລະ ນາຈານ. | 20.000 | 10.000 | 4.000 | 2.000 |
| C4 | ບ້ານຕະບອງເພັດ, ສະພັງແກ້ວ, ນາສະຫວ່າງ, ຫົວເມືອງ, ປົ່ງນາ, ດົງຂວາງ, ແຈລະມ່ອງ, ປົ່ງດົງ ແລະ ດອນປ່າໄລ່. | - | 15.000 | 3.000 | 1.500 |
| C5 | ບ້ານດອນປ່າໄລ່, ໜອງປາກຊ່ອງ, ດົງໝາກກໍ່, ນາແພກ, ນາຄໍາໃຕ້, ດົງນາຂາມ, ດົງກົມ ແລະ ນານໍ້າ ທ່ຽງ. | - | 15.000 | 3.000 | 1.500 |
| C6 | ບ້ານໂພສີແກ້ວ, ນາຈານ, ນາພັງ ໂຄກ, ໂພນຜາງ, ໜອງຫອຍ, ຫ້ວຍ, ດົງໝາກກໍ່, ນາແສນ ແກ້ວ, ນາແພກ, ນາຫຼັກ, ນາຄໍາ ໃຕ້ ແລະ ດົງນາຂາມ. | .- | 5.000 | 3.000 | 1.000 |
| C7 | ບ້ານໜອງປາກຊ່ອງ, ພັງໂຮ, ສີວິ ໄລ , ນານໍ້າທ່ຽງ, ນາໄລ່ໂຄກ | - | - | 4.000 | 1.000 |

| | | | | | |
|---|---|---|---|---|---|
| | ແລະ ດົງກົມ. | | | | |
| C8 | ບ້ານນາໄລ່ໂຄກ, ນາໄລ່ດົງ, ໂນນຮັງ, ໂຄກສະຫວ່າງ, ຫົວເມືອງ, ຫຼຽນໄຊ ແລະ ວັດທະນະສົມບູນ. | - | 5.000 | 3.000 | 1.000 |
| C9 | ບ້ານຫົວເມືອງ, ໂພນນິກຂຽນ, ຫຼຽນໄຊ ວັດທະນະສົມບູນ, ແຈລະມ່ອງ, ປົ່ງນາ ແລະ ໄລກະທະ. | - | 5.000 | 3.000 | 1.000 |

ງ. ເຂດປະເມີນລາຄາທີ່ດິນ ຂອງເມືອງພິນ ລະຫັດ " D " ມີ 15 ເຂດປະເມີນແຕ່ ( D1-D15 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| D1 | ບ້ານ ເອີນທົ່ງຄຳ, ປະສົມໄຊ, ພິນ, ນາໂພ, ນາຈານ, ພອນ, ສະຄວງ. | 30.000 | 20.000 | 10.000 | 5.000 |
| D2 | ບ້ານນາເປາະ, ເຫົ້ມໃໝ່, ໂຄກປູນ, ນາຂະເໜາະ ແລະ ໂນນສະອາດ. | 20.000 | 10.000 | 8.000 | 5.000 |
| D3 | ບ້ານນາກະທານ, ນາທະລັງ, ໂນນຍາງ ແລະ ສະລອຍໃຫຍ່. | 15.000 | 8.000 | 3.000 | 1.000 |
| D4 | ບ້ານວັງບ່ວງ, ອາປອກ, ລະຕຶບ, ຂະໜົມ, ຫີນສະໂງມ, ມະລິວ ແລະ ແກ້ງລະແຫ້ງ. | 15.000 | 8.000 | 3.000 | 500 |
| D5 | ບ້ານດົງພູເງິນ, ກອຍ ແລະ ໂນນໄຊ C17. | 15.000 | 10.000 | 8.000 | 5.000 |
| D6 | ບ້ານຊະນະມີໄຊ, ສີບຸນເຮືອງ, ສົງເປືອຍ, ເທີມເກົ່າ, ປະເຫຼັກ ແລະ ກາງເກົ່າ. | 30.000 | 20.000 | 8.000 | 1.000 |
| D7 | ບ້ານໄຊສົມບູນ, ເຊສະຫວ່າງ,ຕະມູບ, ກາງໃໝ່, ໃໝ່ເລກ9, ອຸດົມໄຊ ແລະ ກະຢ່ອງ. | 15.000 | 10.000 | 8.000 | 5.000 |
| D8 | ບ້ານນາທົ່ມເກົ່າ, ນາໂພຄຳ, ນາແຊງ, ຄຳສະອີ ແລະ ນາຂະນົງ. | 10.000 | 5.000 | 3.000 | 1.000 |
| D9 | ບ້ານສົມສະອາດ, ຫ້ວຍຊາຍ, ພະລອງ, ນາຫູ້, ພະລຸ ແລະ ໜອງຫຼວງ. | 10.000 | 5.000 | 1.000 | 500 |
| D10 | ບ້ານອານຸສັນຍາ, ສະແລໃຕ້,ຂອນແກ່ນ, ສະແລໂພນໄຊ, ອາລວຍໃໝ່,ນາທົ່ມໂຄກ, ອາລວຍ ຄຳ | 15.000 | 10.000 | 1.000 | 500 |

| | | | | | |
|---|---|---|---|---|---|
| | ນ້ອຍ, ສະແລເໜືອ ແລະນາທອງ. | | | | |
| D11 | ບ້ານຕາດໄຂເຊ, ຕາດໄຂໂຄກ ແກ້ງ ກົວະ, ໂນນໄຊ ແລະ ກະແມເຊ. | 10.000 | 5.000 | 3.000 | 500 |
| D12 | ບ້ານໂນນວິໄລ, ທົ່ງມີໄຊ, ນາເພັກ , ໜອງບົວ, ແກະ, ຕັ້ງອາໄລ ແລະ ບິກ. | | | 1.000 | 500 |
| D13 | ບ້ານວັງສີແກ້ວ, ປະສິດ, ຍາງ, ແກ້ງໄຊ, ອາເລົາເກົ່າ, ກະປັງ, ໂພນໄຊ, ໃຜ່, ອາເລົ່າໃໝ່ ແລະ ປະເຊັ່ຍ. | | | 1.000 | 500 |
| D14 | ບ້ານໂນນສູງ, ປະໂທງ, ອາເປັຍ, ສີບບອນ, ພະລອງ (ເຂດ14), ແກ້ງອາເລີງ, ສ້າງແທ່ງ, ສະວຶ ແລະ ຫ້ວຍທອຍ. | | | 1.000 | 500 |
| D15 | ບ້ານສະລຸນ, ທຸບຂາມ, ປະອິກ, ແກ້ງສະລັງ, ລະກາຍ, ອາລານ, ນາປາງ,ບອຍ, ປະຕອງ ແລະ ຫ້ວຍສີງ. | | | 1.000 | 500 |

ຈ. ເຂດປະເມີນລາຄາທີ່ດິນ ຂອງເມືອງເຊໂປນ ລະຫັດ “ E ” ມີ 14 ເຂດປະເມີນແຕ່ ( E1-E14 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| E1 | ບ້ານວັງວິໄລ, ທ່າໂຂ່ງ, ອຸດົມສຸກ ,ສອນມີໄຊ, ນາບໍ່ ແລະ ໂພນ ມ່ວງ. | 50.000 | 30.000 | 10.000 | 3.000 |
| E2 | ບ້ານເຊໂປນ, ຫ້ວຍແຈງ, ເມືອງ ແສນ ແລະ ເມືອງຈັນ. | 30.000 | 15.000 | 3.000 | 1.000 |
| E3 | ບ້ານອາໄລ, ອາລາງ, ແກ້ງ, ແກ້ງ ຫຼວງ, ດົງສະຫວັນ, ປ່າໄລ, ດົງ ໃຫຍ່ ແລະ ລະຄືມ. | 30.000 | 15.000 | 5.000 | 500 |
| E4 | ບ້ານສະໝຸນ, ວັງບົງ, ກາດັບ, ສະ ກີພິນ ແລະ ແກ້ງກີກ. | 25.000 | 15.000 | 5.000 | 500 |
| E5 | ບ້ານແດນສະຫວັນ, ເຟືອງ, ຫວ້ຍ ສານ, ອາສີງ, ກະຕຸບນ້ອຍ, ກະ ຕຸບໃຫຍ່, ມະຫາດ, ກະແຫຼງ ແລະ ຈຽງ. | 50.000 | 20.000 | 10.000 | 500 |
| E6 | ບ້ານຫ້ວຍຈັງ, ລະໂບກາງ, ໂພໄຊ ແລະ ວັງກຸງ. | 30.000 | 10.000 | 5.000 | 500 |

| | | | | | |
|---|---|---|---|---|---|
| E7 | ບ້ານສະແກງ, ພະໂລະ, ຫ້ວຍຍຶງ ແລະ ຫ້ວຍຕ້ອນ. | - | 10.000 | 5.000 | 500 |
| E8 | ບ້ານນາຫຼວງ, ມັນຈີ ແລະ ແກ້ງ ກວີ. | - | 50.000 | 15.000 | 1.000 |
| E9 | ບ້ານແກ້ງຫີວປາ, ທ່າເມະ, ນາ ຫົວນ້ຳ, ແລະ ລະອໍ. | - | - | 3.000 | 500 |
| E10 | ບ້ານກະແຫຼງກາງ, ວັງແຍງ, ຄູນ ອາທໍ, ລະເຕື່ອງ, ຕໍເຮືອ,ສະແລນ ແລະ ວັງເລີກ. | - | 5.000 | 3.000 | 500 |
| E11 | ບ້ານຕ້າຍ, ຫົວນາ, ຊຽງຣິ່ມ, ລະງີ່ , ຕະເປືອ, ກົກໝາກ, ລະ ອານ, ສີບລະອູ, ນາ, ສະປອງ, ລະເອີນ, ລູສະເລຍ, ກ້ອກ, ກະ ລາກ, ອາວຽນ, ລະໂກ, ສະດູນ, ຕະປອງ ແລະ ປະຍຸຍ. | - | - | 3.000 | 500 |
| E12 | ບ້ານແຄວີງ, ວັງໄຊ່, ນາໂຫນ, ລາດທໍ້, ນ້ຳໂຫນ, ໃໝ່ທ່າແດງ, ແລະ ຜາບັງ. | - | 5.000 | 3.000 | 500 |
| E13 | ບ້ານສະເວດ, ປະງາ, ລາດ | - | - | 3.000 | 500 |
| E14 | ບ້ານໂພນໄຮ, ແກ້ງຄຶບ, ສີບມີ ແລະ ວັງໝໍ້ທຸມ. | - | 15.000 | 5.000 | 500 |

ສ. ເຂດປະເມີນລາຄາທີ່ດິນ ຂອງເມືອງນອງ ລະຫັດ " F " ມີ 10 ເຂດປະເມີນແຕ່ ( F1-F10 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| F1 | ບ້ານນອງອີໄລ. | 20.000 | 10.000 | 5.000 | 2.000 |
| F2 | ບ້ານຫີນສະຫວ່າງ,ປູນຍາງ, ປູນ ຕີງ ແລະ ຕັ່ງອາໄລ່ເກົ່າ. | 10.000 | 7.000 | 4.000 | 1.000 |
| F3 | ບ້ານດົງນາສານ, ນາລີງເກົ່າ, ນາ ລີງໃໝ່, ນາກອງ, ຕຳລອງ, ສະ ລອຍເກົ່າ, ສະລອຍໃໝ່ ແລະ ສາງແຈນ. | 8.000 | 5.000 | 3.000 | 1.000 |
| F4 | ບ້ານສະດີ, ປະລຽງໃຫຍ່, ປູນຊີ ເຢີງ ແລະ ພູນໝາກມີ. | - | 7.000 | 3.000 | 1.000 |
| F5 | ບ້ານຕະກໍ, ໂລະ, ຄູນສີ, ໄກສອນ ,ແກ້ງລີ້ນ, ປາຈະຕຽນ, ລະເປົານ້ຳ , ຜູ້ໄທ, ລະເປົາໂຄກ, ປໍໂຄກ, ແລະ ທ່າເທ. | - | 5.000 | 3.000 | 500 |

| | | | | | |
|---|---|---|---|---|---|
| F6 | ບ້ານອາສິງນາ, ອາສິງສາລີ, ອາສິງສະແນະ, ກະແຫຼງພູ, ອາປອກ, ລະເດີ, ແສເກາະ, ປະເລາະ, ປະລຽງ, ແດນອີໄລ, ໂອ່ຍ , ທຸບ ແລະ ປະລຽງນາຍ. | 8.000 | 5.000 | 2.000 | 500 |
| F7 | ບ້ານລະປິດ, ອາເລົາໃຫຍ່, ບາງຍະຫຼາງ, ອາເລົາກຸນກີ, ບໍ່ນໍ້າ, ອາລອຍ ແລະ ລະອຸ. | - | 5.000 | 2.000 | 500 |
| F8 | ບ້ານລະແບງໂຄກ, ລະໄກ້, ປະໂຕ້ຍໃຫຍ່, ລະແບງນໍ້າ, ປະແນະ ແລະ ຕະຢົງ. | 8.000 | 5.000 | 3.000 | 500 |
| F9 | ບ້ານສະວຶ, ຕະຫຼຶງ, ຕະຫຼຸງ, ອາລ໋ອງ, ບໍ່, ຕັງອາໄລນໍ້າ, ຕັງອາໄລເໜືອ, ແສນໃໝ່ ແລະ ຕານໂຕຍ. | - | 5.000 | 3.000 | 500 |
| F10 | ບ້ານຊອງໃຫຍ່, ຊອງໃຕ້, ຊອງຄົນ<br>ຄາກ, ປະລ໋ອຍ, ສະຫຼາງ ແລະ ປະເຊຼີຍ. | - | 7.000 | 5.000 | 1.000 |

ຊ. ເຂດປະເມີນລາຄາທີ່ດິນ ຂອງເມືອງທ່າປາງທອງ ລະຫັດ " G " ມີ 11 ເຂດປະເມີນແຕ່ ( G1-G11 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| G1 | ບ້ານໂນນຈານ ແລະ ທ່າສະລາຄໍາ. | 20.000 | 15.000 | 10.000 | 5.000 |
| G2 | ບ້ານໜອງກົນ, ນາຫົວຄວາຍ ແລະ ພູແສງຄໍາ. | - | 10.000 | 5.000 | 1.000 |
| G3 | ບ້ານແກ້ງແກບ. | - | - | 5.000 | 1.000 |
| G4 | ບ້ານດົງນ້ອຍ, ນາເຊືອກ ແລະ ນາຫ້ວຍໄລ່. | 10.000 | - | 5.000 | 1.000 |
| G5 | ບ້ານນາສະໂນ ແລະ ແກ້ງປິງ. | - | 10.000 | 5.000 | 1.000 |
| G6 | ບ້ານກຸດຣີ, ຫ້ວຍໝື້ນ, ບຸດຕະພານ,ທົ່ງປາງ ແລະ ໃໝ່ໂພສີ. | 15.000 | - | 5.000 | 1.000 |
| G7 | ບ້ານບາກຊຸມຄໍາ, ບ້ານນາຖໍ້າໝູ, ທ່າພີ່, ດອນຂາວ ແລະ ນາຕັງ. | - | 9.000 | 4.000 | 500 |
| G8 | ບ້ານໂນນສະຫວ່າງ,ຜືວຽງຄໍາ,ຫີນຕັ້ງໂຄກ ແລະ ຫີນຕັ້ງກາງ. | - | 9.000 | 4.000 | 500 |

| | | | | | |
|---|---|---|---|---|---|
| G9 | ບ້ານໂນນສີວິໄລ, ນາພະນຽດ, ແກ້ງສະກຼ ແລະ ນາທະມານ. | - | 9.000 | 4.000 | 500 |
| G10 | ບ້ານເຊປ່ອງ, ລະວາງໃຫຍ່, ປະດ່ອງ, ຫ້ວຍໄລ່ ແລະ ນາຈັນທາງ. | - | 8.000 | 4.000 | 500 |
| G11 | ບ້ານພູຜາບາງ, ນາເລົາ, ອາຫໍ, ເຊກຶ, ໄຊສົມບູນ, ແດນສະຫວັງ, ນາປ່າຊາດ ແລະ ແກ້ງພູມາລີ. | 10.000 | 5.000 | 3.000 | 500 |

ຍ. ເຂດປະເມີນລາຄາທີ່ດິນ ຂອງເມືອງສອງຄອນ ລະຫັດ " H " ມີ 16 ເຂດປະເມີນແຕ່ ( H1-H16 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| H1 | ບ້ານນາຄຳນົບ,ຫລັກເມືອງ, ນອນວິໄລ, ປາກຊ່ອງ, ສາລາຄຳ, ລັດຕະນະລາສີ ແລະ ທົ່ງສີເມືອງ. | 100.000 | 60.000 | 30.000 | 3.000 |
| H2 | ບ້ານມະໄລທອງ, ໂນນຝາຍ ແລະ ໜອງຍໍ. | 60.000 | - | 10.000 | 2.000 |
| H3 | ບ້ານມະໄລທອງ, ໂນນຝາຍ ແລະ ໂຊກໄຊ. | - | 30.000 | 10.000 | 2.000 |
| H4 | ບ້ານໂນນສົມບູນ, ໂນນຊົມພູ, ນາກາລາ, ໜອງໄຮ ແລະ ມ່ວງໄຂ່. | 60.000 | 20.000 | 5.000 | 2.000 |
| H5 | ບ້ານໜອງຍໍ ແລະ ທົ່ງສີເມືອງ. | - | 20.000 | 10.000 | 2.000 |
| H6 | ບ້ານໃຫ່ມໜອງຫວ້າ, ນາພອກ, ນາຫອຍປັງ, ນາໜອງຜື, ນາຫວ້າ, ນາຟອງຕົ໊ວ ແລະ ຄຶມສະຫວ່າງ. | - | 15.000 | 10.000 | 1.000 |
| H7 | ບ້ານໜອງເມັກ, ແກ້ງຫີນແກ້ວ, ລາດນາດີ, ນາຄູ, ໂຄກສະອາດ, ຫີນກອງ ແລະ ໃຫມ່ໜອງຫວ້າ. | - | 15.000 | 10.000 | 1.000 |
| H8 | ບ້ານນາຍູງ, ໜອງແດງ, ໜອງອີເຫລືອງ, ນາປົ່ງ, ຄືມສະຫວ່າງ, ນາຟອງຕົ໊ວ, ນາຟອງທ່າ, ໜອງບົວທ່າ, ນາໂພ, ສະບູໄຊ, ທ່າເດື່ອ , ໜອງເດີ່ນທ່າ, ທ່າປະຊຸມ ແລະ ໜອງວັດ. | - | 20.000 | 10.000 | 3.000 |
| H9 | ບ້ານນາໂຄ, ທ່າແພ, ນາດົງ,ເປືອຍຂາວ, ຜັກຂະ, ຫີນກອງ, ນາລາມ ,ນາແສນເທບ ແລະ ໂນນສຳລານ. | - | 10.000 | 5.000 | 1.000 |
| H10 | ບ້ານໜອງຄັນຍູ,ສາລາລ້ຽວ,ໂນນຄຳສູງ, ໂນນສະຫວ່າງ, ແກ້ງໂດນ , ຄຶມມ່ວນ ແລະ ທົວຫາດ. | 50.000 | 15.000 | 5.000 | 1.000 |

| | | | | | |
|---|---|---|---|---|---|
| H11 | ບ້ານໜອງເດີ່ນທົ່ງ, ວິໄຊສີງ, ດົງສະຫວ່າງ, ສີງທ່າ ແລະ ສອງຄອນ. | - | 10.000 | 3.000 | 1.000 |
| H12 | ບ້ານແບ່ງຄຳໄຫຼ, ລະຫານ້ຳ, ທ່າຂາມລຽນ, ລະຫາ ໂຄກ, ກຸດຮີ, ມ່ວງໄຂ່ ແລະ ໂຊກໄຊ. | - | 20.000 | 10.000 | 2.000 |
| H13 | ບ້ານໂບນເຕົາຖ່ານ, ໜີຍັງມ, ແກ້ງຕະງານ, ເຊບັ້ງຫຽງ, ໜອງຂອນ, ນາອຸດົມ, ໂຄກກ່ອງ ແລະ ຫີນຄອກ. | 50.000 | 10.000 | 5.000 | 1.000 |
| H14 | ບ້ານດອນຫວາຍ, ດອນຊາດ, ນາຄະຍອມ, ເຊບັ້ງນວນ, ຄຳສະຫວາງ, ນາຮັງແຂ້, ດອນໃຫ່ຍ, ຫລັກ 11 ແລະ ດ່ານແຕ້ງ. | 50.000 | 10.000 | 5.000 | 1.000 |
| H15 | ບ້ານ ຫ້ວຍຄໍ້, ຫ້ວຍໄຂ່, ນາກະຫລີງ, ດອນຂຽວ, ດອນມ່ວງ,ຊະແຍກ, ນາຊະໂນ, ພະແລງ ແລະ ນາທັງ. | - | 3.000 | 2.000 | 500 |
| H16 | ບ້ານອຸ່ມໝາມຄອງ ແລະ ໜອງນີກຂຽນ. | 50.000 | 15.000 | 5.000 | 1.000 |

ດ. ເຂດປະເມີນລາຄາທີ່ດິນ ຂອງເມືອງຈຳພອນ ລະຫັດ “ I ” ມີ 13 ເຂດປະເມີນແຕ່ ( I1-I13 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| I1 | ບ້ານດົງນາຄອຍ, ດົງໜອງຂຸ່ນ, ຫົວເມືອງ, ແກ້ງກອກທົ່ງ, ແກ້ງກອກເໜືອ, ແກ້ງກອກກາງ ແລະ ແກ້ງກອກດົງ. | 45.000 | 30.000 | 20.000 | 3.000 |
| I2 | ບ້ານນາຄູ, ເຂົາກາດ, ແກ້ງກອກທົ່ງ, ແກ້ງກອກກາງ, ແກ້ງກອກດົງ ແລະ ດົງຄຳໝື່ນ. | 40.000 | 25.000 | 10.000 | 2.000 |
| I3 | ບ້ານນາຄູ, ພະແລງ, ສີທອງ, ດອນແຍງ, ແກ້ງປຸນ, ຂ້າມເຖົ້າ, ດົງມອນ, ໂນນສີທັນ ແລະ ດົງດອກໄມ້. | - | 25.000 | 8.000 | 2.000 |
| I4 | ບ້ານນາເຕີຍ, ໃຜ່, ຫລັກ 35, ເຂົາກາດ, ໜອງແວງ, ນາສານ ແລະ ຄຳນ້ອຍ. | 40.000 | 20.000 | 6.000 | 1.500 |
| I5 | ບ້ານຄຳນ້ອຍ, ໜອງແວງ, ໜອງທົງ, ດົງຄັນຄູ, ຄໍ້ດົງດອກໄມ້, ຂາມເຖົ້າ, ສີທອງ ແລະ ນາຄູ. | - | 15.000 | 5.000 | 1.000 |

| | | | | | |
|---|---|---|---|---|---|
| I6 | ບ້ານຫຼັກ 35. | 55.000 | - | 8.000 | 1.500 |
| I7 | ບ້ານຫ້ວຍຍາງ, ສີວິໄລ, ຫຼັກ35, ຂອນແຕ້ ແລະ ໜອງເປັດ. | 40.000 | - | 6.000 | 1.000 |
| I8 | ບ້ານໜອງເປັດ, ຂອນແຕ້, ສີວິໄລ , ຫຼັກ35, ດົງຄັນຄູ, ໜອງທົ່ງ, ນານົກຂຽນ, ໜອງກະລອງ, ຄຳແຄນ ແລະ ຢາງສູງ. | - | 10.000 | 5.000 | 1.000 |
| I9 | ບ້ານໂພນທອງ, ດົງດອກໄມ້, ບຶກທົ່ງ, ດອນແຍງ, ຊະຄືນເໜືອ, ທ່າມ່ວງ, ທ່າເມືອງ, ດົງເມືອງ, ແສນດົງໝາກກໍ່, ບຶງຕາຫລຸງ, ໜອງຫຍ້າມ້າ, ສີບຸນເຮືອງ, ໂພນມ່ວງ, ໂພນໂດກ, ໂນນຄູນ, ພາຍຂອງ ໂພນສະອາດ, ວັດຕະນາ, ໂຄກແລ້ງ, ໄຜ່ລ້ອມ, ບຶກດົງ, ຄຳແຄນ , ຢາງສູງ, ໂນນຮັງ, ເຫຼົ່າສຸລິຍະ, ໜອງໄຮ, ນາເຊືອກ, ກູດບອນ, ມ່ວງໄຂ່, ພັງເຮັງ, ໂນນສູງ ແລະ ໂພນຕາດ. | - | 8.000 | 5.000 | 1.000 |
| I10 | ບ້ານໂນນວິໄລວັນ, ແກ້ງກອກເໜືອ, ແກ້ງກອກກາງ, ແກ້ງກອກດົງ, ຕາແຫຼວ, ນາກະທ້າງ, ຄຳປ່າແໜ, ປ່າກ້ອຍ, ກະຫຼາງໃຕ້, ກະຫຼາງເໜືອ, ນົກກົກ, ດົງຕະແບງ, ນາຂາມ, ທອດ, ນາໄຮ່ດຽວ, ວັງເມົາ, ເພຍກ່າ ແລະ ລຳບອງ. | 10.000 | 8.000 | 3.000 | 1.000 |
| I11 | ບ້ານນາໄຮ່ດຽວ, ຄຳຕ່ອງລ່ອງ, ຫ້ວຍໝາກເຍົາ, ທອດ, ໜອງກະໂດກ, ລຳເທນ, ເຊ ແລະ ລຳຈັນ. | - | 10.000 | 3.000 | 1.000 |
| I12 | ບ້ານຕາແຫຼວ,ຕາແຫຼວນ້ອຍ, ຄຳປ່າແໜ,ນາຕ້າຍ, ດອນແດງ, ແກ້ງກອກດົງ ແລະ ກະດານ. | 15.000 | 10.000 | 2.000 | 1.000 |
| I13 | ບ້ານນາສານ, ບາກ, ເຂົາກາດ, ດົງກວາງໂຕນ,ກະດານ, ເລົ່າໝາກຄ່າ , ທົ່ວບ້ານສ້າງ, ຫ້ວຍຊາຍ, ບົກ, ຕານສຸມ,ດອນເຕັງ, ຄຳສີດາ, ເຫຼົ່າທົ່ວຄຳ,ເຫຼົ່ານາດ ແລະ ໜອງອີງ. | 30.000 | 15.000 | 6.000 | 1.000 |

ຕ. ເຂດປະເມີນລາຄາທີ່ດິນ ຂອງເມືອງຊົນນະບູລີ ລະຫັດ " J " ມີ 11 ເຂດປະເມີນແຕ່ ( J1-J11 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ |
|---|---|---|

| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
|---|---|---|---|---|---|
| J1 | ບ້ານໂນນສະຫວ່າງ | 20.000 | 10.000 | 5.000 | 1.000 |
| J2 | ບ້ານໂນນຄູ້, ຕຸ່ມແຍ, ນາໜອງຜຳ ແລະ ດົງບູນ. | 15.000 | 10.000 | 5.000 | 1.000 |
| J3 | ບ້ານນາບົງ, ໂນນຮັ່ງມີ, ໜອງເບັນ ແລະ ນາຫວ້າສົມໄຊ. | - | - | 2.000 | 1.000 |
| J4 | ບ້ານໄຊວົງທິລາດ, ປະຕົງ, ຕຳປອງ ແລະ ເຊວັນ. | - | 5.000 | 2.000 | 1.000 |
| J5 | ບ້ານຊຽງຣົ່ມ, ບຶງຊ້າງ, ກອງປະທຸມວັນ, ໂພໄຊຄູນ, ແສງຈະເລີນ , ໜອງຜື, ດົງນາງາມ, ດົງຫົງຄຳ, ໄຊສົມບູນ, ໂຄກຫົວຊ້າງ, ດົງຫວາຍ, ທ່າຄຳເຫຼື້ອມ ແລະ ດວງມາລາ. | 15.000 | 10.000 | 5.000 | 1.000 |
| J6 | ບ້ານໂນນຍາງ, ນາໂພນທອງ,ໂພນຕານ, ໜອງບົວຫຼວງ ແລະ ດອນຍາໂນງ. | - | 5.000 | 3.000 | 1.000 |
| J7 | ບ້ານວັງໂຄນຄຳ, ນາແພງ, ອຳພາວັງ, ກະເບົາ, ແກ້ວຄຳດີ, ອະທຳ ແລະ ວິໄຊ. | 10.000 | - | 3.000 | 1.000 |
| J8 | ບ້ານ ໜອງບົວລາວ ແລະ ດົງມິດ. | 10.000 | 5.000 | 3.000 | 1.000 |
| J9 | ບ້ານລຳຫວາຍ, ຕັ່ງຫວາຍໂຄກ , ນາທອງ, ປົ່ງ, ອາລາງ ແລະ ແກ້ງທີ່. | - | 10.000 | 5.000 | 500 |
| J10 | ບ້ານຕັ່ງຫວາຍນ້ຳ, ກະລຶມວັງແຂ້ , ໜອງສິມ, ດົງໜອງແຄນ, ເມືອງໂຮງ, ໜອງສອງຫ້ອງ, ສະໜາມໄຊ , ລຳບຽດ, ກະທອງເຊ ແລະ ນາຈານໃຫຍ່. | - | - | 3.000 | 500 |
| J11 | ບ້ານປະລຸງ, ດົງອາລາງ, ນາສະໂນ , ປົງເຊທ່າມວກ, ນາໄຊ ແລະ ນາລາແອນ. | - | - | 1.000 | 500 |

ຖ. ເຂດປະເມີນລາຄາທີ່ດິນ ຂອງເມືອງໄຊບູລີ ລະຫັດ “ K ” ມີ 15 ເຂດປະເມີນແຕ່ ( K1-k15 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |

| | | | | | |
|---|---|---|---|---|---|
| K1 | ບ້ານເຄືອເຂົາກາດ,ນາແດງ, ນາມ່ວງ,ມະນີລາດ, ກາງ, ນາສອບ, ຍາງຄໍ້າ, ເລົ່າຝ້າຍ ແລະ ແກ້ງແຮດ. | 40.000 | 15.000 | 7.500 | 2.500 |
| K2 | ບ້ານໜອງສະພັງ ແລະ ຜັກຂະຫຍ່າ. | 25.000 | 15.000 | 7.000 | 2.000 |
| K3 | ບ້ານແກ້ງກະເບົາເໜືອ, ແກ້ງກະເບົາໃຕ້, ດົງພຸງ ແລະ ສີວິໄລ. | 20.000 | 15.000 | 6.000 | 1.500 |
| K4 | ບ້ານທ່າຄໍ້, ປາກເຊບັ້ງໄຟ, ນາສັງ ແລະ ບົວໄຂ. | 15.000 | 10.000 | 6.000 | 1.000 |
| K5 | ບ້ານຕົ້ນແຫນ, ເວີນເໜືອ ແລະ ເວີນໃຕ້. | - | 10.000 | 5.000 | 1.000 |
| K6 | ບ້ານນາວເໜືອ, ນາວໃຕ້, ດົງພ້າວ, ດົງພູ້, ນາສອບ ແລະ ຍາງຄໍ້າ. | - | 9.000 | 4.000 | 1.000 |
| K7 | ບ້ານນາເທົງ, ແກ້ງກະເບົາໃຕ້ ແລະ ສະຫວ່າງ. | - | 8.000 | 3.000 | 1.000 |
| K8 | ບ້ານສີໃຄ, ກາງ ແລະ ດ້າງສະຫວັນ. | - | 7.000 | 3.000 | 1.000 |
| K9 | ບ້ານທ່າຂາມ ແລະ ຄໍາໃບນສູງ. | - | 6.000 | 3.000 | 1.000 |
| K10 | ບ້ານໜອງເຮືອງທອງ , ນາຊຽງຄານ, ຫ້ວຍແຮ່ ແລະ ສີມສະອາດ. | - | 6.000 | 3.000 | 1.000 |
| K11 | ບ້ານຜັກເພື້ອ, ສະກອງ, ແກ້ງໂພສີ, ກ້າງປາ, ດົງຍາງ ແລະ ດົງພູ້. | - | 5.000 | 2.500 | 1.000 |
| K12 | ບ້ານໂພນທັນ, ຫາດຊາຍສູງ ແລະ ບຶງເຊ. | - | 5.000 | 2.500 | 1.000 |
| K13 | ບ້ານປ່າໄລ່, ດົງໝາກໄຟ, ແກ້ງແວງ ແລະ ຊຽງໃຄ. | - | 5.000 | 2.500 | 1.000 |
| K14 | ບ້ານດົງໄພວັນ, ນາເຮືອງ, ໜອງຂຽດເຫຼືອງ, ດົງໝາກໄພ, ນາມ່ວງ , ກະຈູ, ແກ້ງແຮດ ແລະ ເລົ່າຝ້າຍ. | - | 5.000 | 2.500 | 1.000 |
| K15 | ບ້ານພູໂກະ ແລະ ໜອງແວງ. | - | 4.000 | 2.000 | 1.000 |

ທ. ເຂດປະເມີນລາຄາທີ່ດິນ ຂອງເມືອງວິລະບູລີ ລະຫັດ " L " ມີ 13 ເຂດປະເມີນແຕ່ ( L1-L13 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ |
|---|---|---|

| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
|---|---|---|---|---|---|
| L1 | ບ້ານປຸ່ງຄໍາ. | 40.000 | 30.000 | 20.000 | 5.000 |
| L2 | ບ້ານປະດົງ, ໂນນສົມບູນ, ໜອງກະແດ້ງ, ນໍ້າຄີບ, ວັງຍາງ ແລະ ສີບກົງ. | 30.000 | 20.000 | 10.000 | 2.000 |
| L3 | ບ້ານສີບປາ, (ແກ້ງເຕົ່າ,ໂນນສູງ) ແກ້ງເຫຼັກໃຕ້, ແກ້ງຫຼວງ ແລະ ຜາຂະເຫຍາະ. | 20.000 | 15.000 | 8.000 | 2.000 |
| L4 | ບ້ານຫ້ວຍຊວ້ານ, ນໍ້າຄືນ, ໄໝ່ນໍ້າແມງ, ໂນນຊຶມພູ, ນາແຫນເຫ້ຍ, ນາກະຈັນ ແລະ ນານໍ້າສ້າງ. | 20.000 | 15.000 | 9.000 | 2.000 |
| L5 | ບ້ານເຫຼົ່າຫຼວງ, ນາຊູ, ນາແອະ, ນາຍົມ, ຫາດ, ນາເຕີ້, ຜາພືລາງ, ໄຮ່ ແລະ ດົງບັງ. | - | 15.000 | 9.000 | 1.000 |
| L6 | ບ້ານນາຊຽງແລ, ນາໂພ, ນາເມືອງແສນ, ນາແກ, ເຫຼົ່າທ່າ, ຂົວງະ , ກົກຕ້ອງ, ນາມົນ ແລະ ໜອງກະປາງ. | - | 10.000 | 5.000 | 1.000 |
| L7 | ບ້ານນາບາລູ, ນາຂາງ ແລະ ນໍ້າແລບ. | - | 10.000 | 5.000 | 1.000 |
| L8 | ບ້ານປຸ່ງປໍ່, ດົງຍາງ, ນາຜາດ່າງ, ໂພນສະຫວ່າງ, ກະແດບ, ສີມສະນຸກ, ໂນນສໍາລານ ແລະ ນາກະພຸງ. | - | 10.000 | 5.000 | 1.000 |
| L9 | ບ້ານເມືອງຫຼວງ, ແກ້ງເກີກ, ນາກະຊີນ, ນາຫອຍ ແລະ ວັງທ່າຄວາຍ. | - | 10.000 | 5.000 | 1.000 |
| L10 | ບ້ານກົກໝາກ, ນໍ້າປະເຄນ, ແກ້ງເຫຼັກເໜືອ, ທົ່ງຫຼວງ ແລະ ຫ້ວຍທອງ. | - | 10.000 | 5.000 | 500 |
| L11 | ບ້ານນໍ້າປາ, ນໍ້າຈະໂລະ, ນໍ້າມະຣີ, ວັງຮັງ ແລະ ອ່າງຄໍາ. | - | 10.000 | 5.000 | 500 |
| L12 | ບ້ານສີບສະລຸງ, ສະເລາະເໜືອ ແລະ ກະຫຼາຍ. | - | 3.000 | 1.000 | 500 |
| L13 | ບ້ານໄຊຍະລາດ, ແກ້ວວິໄລ, ຂີ້ຄັ່ງ , ນາສະເລາະ ແລະ ປ່າຜັກເນົ່າ. | 20.000 | 10.000 | 5.000 | 1.000 |

ນ. ເຂດປະເມີນລາຄາທີ່ດິນ ຂອງເມືອງອາດສະພອນ ລະຫັດ " M " ມີ 8 ເຂດປະເມີນແຕ່ ( M1-M8 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ |
|---|---|---|

| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
|---|---|---|---|---|---|
| M1 | ບ້ານຫາດດອກແກ້ວ. | 20.000 | 10.000 | 8.000 | 3.000 |
| M2 | ບ້ານນາກຸດຈານ, ຜັກຂະຫຍ່າ, ຫາດດອກແກ້ວ, ໜອງເດີ່ນ, ນາຮັງນ້ອຍ, ນາມີນ, ນາວັງມີນ, ດົງນາງາມ, ດົງຫາດາ, ກຸດນ້ຳແລ້ງ, ແລະ ດົງຫວາຍດິນ. | 10.000 | 5.000 | 3.000 | 1.000 |
| M3 | ບ້ານນາເດື່ອ, ນາເຂົ້າມົ້ນ, ຫີນສີວ ,ນາໝາກເກື້ອ, ໂພນຕູມ, ໂພໄຊ, ໂພນນາດີ, ໂພນງາມ,ໂພນແພງ, ນາກະທົງ, ຜັກກະດາ, ບຶງ, ຫາດດອກແກ້ວ, ແລະ ໜອງບົວ. | 10.000 | 5.000 | 3.000 | 1.000 |
| M4 | ບ້ານໜອງບົວ, ກຸດຊຸງ, ສີມໂຮງ, ກຸດຫີນ,ໄຊໂພນສີມ, ນາປອດ, ຜັກຂະຫຍ່າ, ກຸດແຄນ,ສອງຫ້ອງ ແລະ ນາຮັງນ້ອຍ. | - | 6.000 | 3.000 | 500 |
| M5 | ບ້ານໂພນຕູມ, ໂພໄຊ, ຊຽງອ້ວນ, ກຸດຊຸງ, ນາກະທົງ, ຜັກກະດາ, ຕາດຂາແດງ, ດອນກະພູ້ງ, ດອນກອງ, ກົກແດງ, ນາແຄ, ໂນນຍາງກາງຕື້ວ, ນານ້ອຍ, ບັງແບດເຊ, ຄຳພູ, ດົງຄຳກວານ ແລະ ນາໝາກເກືອ. | 10.000 | 5.000 | 3.000 | 500 |
| M6 | ບ້ານນາປາຄາ, ຈອມຮາດ, ດົງຂັນຄຳ, ຫ້ວຍງົວຄຳ, ນາຂາມ, ນາເລົ່າ , ວຽງໄຊ, ນາກະປັງ, ນາມີນ, ກຸດ ຫີນ, ກຸດນ້ຳແລ້ງ ແລະ ຕົ້ນໂພສີ. | - | 4.000 | 2.000 | 500 |
| M7 | ບ້ານນາທົ່ມ, ສີງສະຫວ່າງ, ຫ້ວຍເດື່ອ, ດົງຫວາຍ, ນາວັງມີນ, ນາມີນ. | - | 4.000 | 2.000 | 500 |
| M8 | ບ້ານໂຄກະຕ່າຍ, ພອນສະຫວັນ, ດົງສານ, ແກ້ງແດງ, ຫ້ວຍຍາງ, ແກ້ງມົ້ມ,ໂພນບົກ ແລະ ສີບເຊ. | 10.000 | 4.000 | 2.000 | 500 |

ບ. ເຂດປະເມີນລາຄາທີ່ດິນ ຂອງເມືອງໄຊພູທອງ ລະຫັດ " N " ມີ 14 ເຂດປະເມີນແຕ່ ( N1-N14 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |

| | | | | | |
|---|---|---|---|---|---|
| N1 | ບ້ານທ່າດ່ານ , ດອນຫວາຍ ແລະ ນາພານ. | 30.000 | 20.000 | 5.000 | 1.500 |
| N2 | ບ້ານບຸ່ງນາດີ, ຫົວຫາດ, ສີມ ສະອາດ ແລະ ທ່າໂພ. | 30.000 | 20.000 | 5.000 | 1.500 |
| N3 | ບ້ານສີມສະອາດ, ຄຳແຮ້ງ, ນ້ຳພູ, ດົງໂພສີ, ນາໂດນ, ຂົວຄຳ, ແລະ ຄຳຊຸ້ນ. | - | 20.000 | 5.000 | 1.500 |
| N4 | ບ້ານຂົວຄຳ ແລະ ຄຳຊຸ້ນ. | 50.000 | 20.000 | 10.000 | 1.500 |
| N5 | ບ້ານ ມ່ວງໄຂ່, ນ້ຳພຸ, ດົງໂພສີ ແລະ ບ້ານດົງໝາກໄຟ. | 30.000 | 20.000 | 5.000 | 1.500 |
| N6 | ບ້ານດອນຕູມ, ດົງໝາກໄຟ ສີສະຫວ່າງເໜືອ, ແລະ ໂພນ ທາດ. | - | 20.000 | 6.000 | 1.500 |
| N7 | ບ້ານດົງໝາກໄຟ ແລະ ສີສະ ຫວ່າງເໜືອ. | 50.000 | 20.000 | 10.000 | 1.500 |
| N8 | ບ້ານພູມມະເຈດີ, ໂພນທາດ, ນາ ຄຳ, ນາລະໂອ່ງ ແລະ ໂພສີແກ້ວ. | 30.000 | 20.000 | 6.000 | 1.500 |
| N9 | ບ້ານນາໝາກເກືອ, ໂພນສົ້ມໂຮງ ແລະ ຕາກແດດ. | - | 20.000 | 6.000 | 1.500 |
| N10 | ບ້ານຄັນນາຈານ, ເອີນຄູນ ແລະ ເຫຼົ່າໝາກຫຸດ. | 30.000 | 20.000 | 5.000 | 1.500 |
| N11 | ບ້ານໂພນທັນ, ຫ້ວຍຂະຫຍອງ ແລະ ຄຳແສນໄຊ (ຄຸ້ມໜອງກຸງ). | - | 20.000 | 5.000 | 1.500 |
| N12 | ບ້ານໂພສີແກ້ວ, ນາລະໂອງ ແລະ ຄຳແສນໄຊ. | 40.000 | 20.000 | 10.000 | 1.500 |
| N13 | ບ້ານຫ້ວຍມ່ວງ, ດົງດອກໄມ້ ແລະ ເຮືອນຫີນ. | 25.000 | 15.000 | 5.000 | 1.500 |
| N14 | ບ້ານນາບໍ່, ນາຈານ, ນາດູ່, ນາ ໂມງ ແລະ ສີສະຫວ່າງໃຕ້. | - | 15.000 | 5.000 | 1.500 |

ປ. ເຂດປະເມີນລາຄາທີ່ດິນ ຂອງເມືອງພະລານໄຊ ລະຫັດ " O " ມີ 11 ເຂດປະເມີນແຕ່ ( O1-O11 )

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | ຖະໜົນສາຍຫຼັກ ( ກີບຕໍ່ຕາແມັດ ) | ຖະໜົນເຊື່ອມຕໍ່ ( ກີບຕໍ່ຕາແມັດ ) | ຖະໜົນສາຍແຈກ ( ກີບຕໍ່ຕາແມັດ ) | ຖະໜົນດັ້ງເດີມ ( ກີບຕໍ່ຕາແມັດ ) |
| O1 | ບ້ານຫົວເມືອງ, ໂພນຕານ, ໂພໄຊ ,ພະນົມ, ພະລານເໜືອ, ນາໝາກ ມີ້ ແລະ ພະລານໃຕ້. | 25.000 | 10.000 | 5.000 | 2.000 |

| | | | | | |
|---|---|---|---|---|---|
| O2 | ບ້ານທົ່ວເມືອງ, ໂພນຕານ, ໂພສີ ແລະ ໂນນມີໄຊ. | 20.000 | 8.000 | 3.000 | 1.000 |
| O3 | ບ້ານພະລານໃຕ້, ອຸດົມໄຊ, ເຫຼົ່າຫຼວງ ແລະ ກະຫຼອງເໜືອ. | 20.000 | 8.000 | 3.000 | 1.000 |
| O4 | ບ້ານຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ, ກະຫຼອງເໜືອ ແລະ ນາຫູ້ໃໝ່. | 15.000 | 5.000 | 2.000 | 1.000 |
| O5 | ບ້ານໂພສີ, ໂນນມີໄຊ, ດົງບັງ ແລະ ໂທະ. | 15.000 | 5.000 | 2.000 | 1.000 |
| O6 | ບ້ານທົ່ວເມືອງ, ໂພນຕານ,ນາໝາກມີ້, ໂພສີ , ນາໂພວັດ, ນາໂພສີມບູນ, ໜອງແວງ, ບຶງທະເລ ,ນາກາງເຊ, ນາກາງທົ່ງ ແລະ ນາຊາຍ. | - | 5.000 | 1.500 | 500 |
| O7 | ບ້ານນາກາງເຊ, ນາກາງທົ່ງ, ນາຊາຍ, ແກ້ງໄຊນ້ອຍ, ດອນຕິ້ວ, ນາຣຸ, ໂນນມີໄຊ, ໂທະ ແລະ ສະໜູນ. | - | 5.000 | 1.500 | 500 |
| O8 | ບ້ານຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ, ນາໝາກມີ້, ພະລານໃຕ້,ບຶງທະເລ, ນາກາງເຊ, ແກ້ງໄຊນ້ອຍ, ນາຂອ່າງ, ກະຫຼອງເໜືອ ແລະກະລອງໃຕ້. | - | 5.000 | 1.500 | 500 |
| O9 | ບ້ານບຶງທະເລ, ນາກາງເຊ, ແກ້ງໄຊໃຫຍ່ ແລະ ນາຂອ່າງ. | - | 4.000 | 1.000 | 500 |
| O10 | ບ້ານແກ້ງພາມ, ຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ, ນາຫູ້ໃຫຍ່, ໂພນ ,ນາຊະຄຸ, ນາຈັນໃຕ້, ທົ່ນແຕກ , ນາທ່ອນ, ນາຂັ້ນໄດ, ຊຽງແລນ້ຳ, ກະສິກເໜືອ, ກະແສນ, ຫຼັກໄຊ, ນາຫູ້ໃໝ່, ພະນົມໄຊ, ໂພໄຊ,ທົ່ວ ເມືອງ, ໂພສີ, ຊຽງແລໂຄກ , ນາລາຍ, ເຫົ້ມນ້ອຍ, ເຫົ້ມໃຫຍ່ແກ້ງຈິບ, ວັງໂຄນ, ນາບໍ່ເໜືອ, ນາກະປັງ, ໜອງຜື, ດອນ, ນາມ່ວງ, ກະແສນ, ໂພນບົກ ແລະ ນາມ່ວງ. | - | 4.000 | 1.000 | 500 |
| O11 | ບ້ານດອນ, ໜອງຜື, ກະສິກເໜືອ ,ຊຽງແລນ້ຳ, ນາຈັນໃຕ້, ທົ່ນແຕກ ແລະ ຫຼັກໄຊ. | - | 4.000 | 1.000 | 500 |

**ມາດຕາ 10 ກຳນົດອັດຕາສ່ວນຫຼຸດສຳລັບເນື້ອທີ່ດິນ ແລະ ລາຄາສິ່ງປຸກສ້າງ**

**10.1. ການກຳນົດອັດຕາສ່ວນຫຼຸດສຳລັບເນື້ອທີ່ດິນ**

ສຳລັບການກຳນົດອັດຕາສ່ວນຫຼຸດເນື້ອທີ່ດິນ ແມ່ນໄດ້ກຳນົດ ຕາມປື້ມຄູ່ມື ການປະເມີນລາຄາທີ່ດິນຂອງກົມຄຸ້ມຄອງທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບລົງວັນທີ 12 ທັນວາ 2012.

| ເນື້ອທີ່ (ຕາແມັດ) | ເປີເຊັນຄິດໄລ່ (%) |
|---|---|
| ເນື້ອທີ່ດິນແຕ່ 800 ຕາແມັດ ລົງມາ | 100% |
| ເນື້ອທີ່ດິນແຕ່ 801-3.200 ຕາແມັດ | 75% |
| ເນື້ອທີ່ດິນແຕ່ 3.201-4.000 ຕາແມັດ | 65% |
| ເນື້ອທີ່ດິນແຕ່ 4.001-8.000 ຕາແມັດ | 55% |
| ເນື້ອທີ່ດິນແຕ່ 8.001 ຕາແມັດ ຂຶ້ນໄປ | 50% |

**10.2. ການກຳນົດອັດຕາສ່ວນຫຼຸດລາຄາສິ່ງປຸກສ້າງ**

ສຳລັບການກຳນົດອັດຕາສ່ວນຫຼຸດ ຂອງສິ່ງປຸກສ້າງ, ປະເພດສິ່ງປຸກສ້າງ, ຫົວໜ່ວຍ, ອາຍຸສິ່ງປຸກສ້າງ ( ລາຄາຫົວໜ່ວຍ/ກີບ ) ແມ່ນໄດ້ກຳນົດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 69/ນຍ, ລົງວັນທີ 05 ສິງຫາ 2010 ວ່າດ້ວຍ ການຮັບຮອງເອົາ ແລະ ປະກາດໃຊ້ລາຄາຫົວໜ່ວຍກໍ່ສ້າງຂົວທາງ ແລະ ເຄຫາສະຖານ.

| ປະເພດສິ່ງປຸກສ້າງ | ອາຍຸສິ່ງປຸກສ້າງ ( ລາຄາຫົວໜ່ວຍ / ກີບ ) | | |
|---|---|---|---|
| | ຫົວໜ່ວຍ | ກ່ອນປີ 2010 | ນັບແຕ່ປີ 2010 |
| ເຮືອນແບບຊົງລາວ | ມ2 | 712.000 | 1.068.000 |
| ເຮືອນ 2 ຊັ້ນ ( ເຄິ່ງກໍ່ເຄິ່ງໄມ້ ) | ມ2 | 673.545 | 1.010.000 |
| ເຮືອນກໍ່ແບບທັນສະໄໝ | ມ2 | 609.000 | 914.000 |
| ເຮືອນກໍ່ແບບທຳມະດາ | ມ2 | 328.000 | 492.000 |
| ເຮືອນໄມ້ | ມ2 | 264.000 | 396.000 |

## ໝວດທີ 3
## ການຈົດທະບຽນທີ່ດິນ, ການຈົດທະບຽນສິ່ງປຸກສ້າງ
## ການຄິດໄລ່ລາຄາ ແລະ ຄ່າທຳນຽມ

**ມາດຕາ 11 ການຈົດທະບຽນທີ່ດິນ**

ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແມ່ນການບັນທຶກທຸກການເຄື່ອນໄຫວ, ການປ່ຽນແປງກ່ຽວກັບສິດນຳໃຊ້ທີ່ດິນ ເຂົ້າໃສ່ປື້ມທະບຽນທີ່ດິນ.

**ມາດຕາ 12 ການຈົດທະບຽນສິ່ງປຸກສ້າງ**

ການຈົດທະບຽນສິ່ງປຸກສ້າງ ແມ່ນການບັນທຶກທຸກຂໍ້ມູນຂອງສິ່ງປຸກສ້າງທີ່ຕິດພັນກັບການປ່ຽນແປງສິດນຳໃຊ້ທີ່ດິນ ເຂົ້າໃສ່ປື້ມຈົດທະບຽນນິຕິກຳ.

**ມາດຕາ 13 ປະເພດສິ່ງປຸກສ້າງ**

**13.1 ສິ່ງປຸກສ້າງທີ່ຢູ່ອາໄສປະກອບມີ 05 ປະເພດ:**

- ເຮືອນແບບຊົງລາວ;

- ເຮືອນກໍ່ແບບທັນສະໄໝ;
- ເຮືອນກໍ່ທຳມະດາ;
- ເຮືອນ 2 ຊັ້ນ ເຄິ່ງກໍ່ເຄິ່ງໄມ້;
- ເຮືອນໄມ້ ( ເຮືອນຮ້ານ ).

**13.2 ປະເພດສິ່ງປຸກສ້າງທີ່ນຳໃຊ້ເປັນສະຖານເຮັດວຽກ ແລະ ກິດຈະການດ້ານຕ່າງໆປະກອບມີ:**

ອາຄານທີ່ໃຊ້ເປັນສະຖານທີ່ເຮັດວຽກງານ ຫຼື ກິດຈະການດ້ານຕ່າງໆ ເຊັ່ນ: ດ້ານສາທາລະນະສຸກ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສຶກສາ, ວັດທະນະທຳ-ສັງຄົມ, ສາສະໜາ, ກິລາ, ທຸລະກິດການຄ້າ, ອຸດສະຫະກຳ, ກະສິກຳ ແລະ ອື່ນໆ.

**ມາດຕາ 14 ການຄິດໄລ່ມູນຄ່າຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ**

ການຄິດໄລ່ມູນຄ່າຈົດທະບຽນທີ່ດິນ ແມ່ນການເອົາເນື້ອທີ່ທັງໝົດຂອງທີ່ດິນ ຊຶ່ງມີຫົວໜ່ວຍເປັນຕາແມັດ ຕາມການລັງວັດແທກ, ກວດກາ ແລະ ຢັ້ງຢືນ ຂອງວິຊາການຈາກພາກສ່ວນກ່ຽວຂ້ອງ ຄູນໃຫ້ ຫົວໜ່ວຍລາຄາເຂດປະເມີນທີ່ດິນ ແລ້ວຄູນອັດຕາສ່ວນຮ້ອຍ (%) ຂອງການມອບ-ໂອນສິດນຳໃຊ້ທີ່ດິນແຕ່ລະປະເພດ ທີ່ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ-ຄ່າບໍລິການທີ່ປະກາດໃຊ້ແຕ່ລະໄລຍະ.

ການຄິດໄລ່ມູນຄ່າຈົດທະບຽນສິ່ງປຸກສ້າງ ແມ່ນການເອົາເນື້ອທີ່ນຳໃຊ້ທັງໝົດຂອງສິ່ງປຸກສ້າງ ຄູນໃຫ້ລາຄາປະເພດສິ່ງປຸກສ້າງ ກ່ອນປີ 2010 ແລະ ນັບແຕ່ປີ 2010 ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້; ໃນຕາຕະລາງການກຳນົດລາຄາສິ່ງປຸກສ້າງ ຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 69/ນຍ, ລົງວັນທີ 05 ສິງຫາ 2010 ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ລາຄາຫົວໜ່ວຍກໍ່ສ້າງຂົວທາງ ແລະ ເຄຫາສະຖານ.

**ມາດຕາ 15 ຄ່າທຳນຽມ**

ຄ່າທຳນຽມຈົດທະບຽນ ການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ແຕ່ລະໄລຍະ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ຫ້າມຜູ້ທີ່ມີຈຸດປະສົງປະກອບເອກະສານກ່ຽວກັບການຈົດທະບຽນການປ່ຽນ ແປງສິດຄຸ້ມຄອງ, ນຳໃຊ້ທີ່ດິນນຳການຈັດຕັ້ງທີ່ກ່ຽວຂ້ອງ ມີການປອມແປງ ຫຼື ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າໜ້າທີ່ຮັບຜິດຊອບວຽກງານຈົດທະບຽນ ປອມແປງ, ແຈ້ງ, ສ້າງຂໍ້ມູນເທັດ, ສະໜອງຂໍ້ມູນອັນບໍ່ຖືກຕ້ອງຕາມຄວາມຈິງ ເພື່ອອຳນວຍຄວາມສະດວກ ແລະ ຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ;
2. ຫ້າມໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງ;
3. ຫ້າມຊື້-ຂາຍ, ມອບ-ໂອນ ແລະ ສືບມູນມໍລະດົກ ກ່ຽວກັບທີ່ດິນ ແລະ ສິ່ງປຸກສ້າງແລ້ວ ບໍ່ນຳມາຈົດທະບຽນປ່ຽນແປງນິຕິກຳກ່ຽວກັບສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງນຳຂະແໜງທີ່ດິນໃຫ້ຖືກຕ້ອງ.

**ມາດຕາ 17 ຂໍ້ຫ້າມສຳລັບເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງ**

ຫ້າມເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຄວາມຮັບຜິດຊອບ ສົມຮູ້ຮ່ວມຄິດກັບບຸກຄົນ, ນິຕິບຸກຄົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ໃນການຈົດທະບຽນເອກະສານນິຕິກຳກ່ຽວກັບການປ່ຽນແປງ ແລະ ການເຄື່ອນໄຫວສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງ;
2. ຫ້າມຮັບ ຫຼື ທວງເອົາສິນບົນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງເພື່ອຫາຜົນປະໂຫຍດແກ່ຕົນ;
3. ຫ້າມກົດໜ່ວງ, ຖ່ວງດຶງເກີນກວ່າເວລາທີ່ທາງການກຳນົດໄວ້, ມີການຊຸກເຊື່ອງ ຫຼື ທຳລາຍເອກະສານນິຕິກຳກ່ຽວກັບການຂໍຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເກີນກວ່າເວລາທີ່ລະບຽບການກຳນົດໄວ້ຢ່າງເດັດຂາດ;
4. ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ອົງການຄຸ້ມຄອງ

**ມາດຕາ 18 ອົງການຄຸ້ມຄອງ**

ການຄຸ້ມຄອງການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ແມ່ນອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສູນໃນຂອບເຂດທົ່ວແຂວງໂດຍມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງເປັນຜູ້ຄຸ້ມຄອງໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊິ່ງປະກອບດ້ວຍ:

- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
- ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ;
- ອົງການປົກຄອງບ້ານ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ**

1. ປະຕິບັດ ກົດໝາຍ ແລະ ມະຕິຕົກລົງ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳກ່ຽວກັບວຽກງານການຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ;
2. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນທົ່ວແຂວງ ;
3. ຄຸ້ມຄອງ-ບໍລິຫານ, ຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນ, ຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ໃນຂອບເຂດທົ່ວແຂວງ;
4. ໂຄສະນາ, ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ແລະ ບັນດານິຕິກຳຕ່າງໆກ່ຽວຂ້ອງ ໃຫ້ບັນດາການຈັດຕັ້ງຂັ້ນແຂວງ, ເມືອງ, ຕະຫຼອດຮອດບ້ານ ຢ່າງທົ່ວເຖິງກ່ຽວກັບວຽກງານຄຸ້ມຄອງການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
5. ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດການຳພະແນກການກ່ຽວຂ້ອງອື່ນໆ ເປັນຕົ້ນ ພະແນກການເງິນ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງໃນການປະຕິບັດລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງຕ່າງໆ;
6. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຂອງໜ່ວຍງານ, ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງວຽກງານຂຶ້ນທະບຽນ, ຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ ກ່ຽວກັບການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແລະ ສິ່ງປຸກສ້າງ ຕາມຂໍ້ຕົກລົງສະບັບນີ້;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໃນລະບຽບການ ແລະ ກົດໝາຍ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ**

1. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງ, ມະຕິ, ຄຳສັ່ງ ແລະ ບັນດາກົດໝາຍກ່ຽວຂ້ອງ ໃຫ້ບັນດາການຈັດຕັ້ງ ຂັ້ນເມືອງ, ນະຄອນ, ບ້ານ ແລະ ປະຊາຊົນໃຫ້ຮັບຮູ້ ແລະ ເຊື່ອມຊຶມຢ່າງທົ່ວເຖິງ;
2. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນຂອງບ້ານ;
3. ຂຶ້ນທະບຽນ, ຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ໃນຂອບເຂດທົ່ວເມືອງ ແລະ ນະຄອນ;
4. ເກັບກຳຂໍ້ມູນ ການເຄື່ອນເໜັງລາຄາທີ່ດິນ ແລະ ສິ່ງປຸກສ້າງ ຕາມການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ພື້ນຖານໂຄງລ່າງພາຍໃນເມືອງ ແລະ ນະຄອນ;
5. ນຳສະເໜີ, ລາຍງານພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອຂໍຄຳເຫັນກ່ຽວກັບການກຳນົດເຂດປະເມີນລາຄາທີ່ດິນບັນດາເມືອງ ແລະ ນະຄອນ ທີ່ມີຊາຍແດນຕິດຈອດກັນເປັນແຕ່ລະໄລຍະ;
6. ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ນຳຫ້ອງການກ່ຽວຂ້ອງອື່ນໆ ເປັນຕົ້ນ ຫ້ອງການ-ການເງິນ, ຫ້ອງການໂຍທາທິການ ແລະ ຂົນສົ່ງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ນະຄອນ ເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງ ໃນການປະຕິບັດລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

1. ໂຄສະນາ, ເຜີຍແຜ່ ຂໍ້ຕົກລົງ, ມະຕິ, ຄຳສັ່ງ ແລະ ບັນດາກົດໝາຍກ່ຽວຂ້ອງໃຫ້ບັນດາການຈັດຕັ້ງຂັ້ນບ້ານ, ຕະຫຼອດຮອດປະຊາຊົນບັນດາເຜົ່າພາຍໃນບ້ານ ຢ່າງທົ່ວເຖິງກ່ຽວກັບວຽກງານຄຸ້ມຄອງການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ;
2. ຊີ້ນາ, ຄຸ້ມຄອງ, ຊຸກຍູ້ ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນຂອງໜ່ວຍງານທີ່ດິນຂັ້ນບ້ານ;
3. ຮ່ວມມື ແລະ ອານວຍຄວາມສະດວກໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນທີ່ດິນ ແລະ ສິ່ງປຸກສ້າງ ສັງລວມຂໍ້ມູນໄວ້ໃນຂອບເຂດການປົກຄອງບ້ານ ແລະ ປະສານສົມທົບກັບບັນດາບ້ານທີ່ມີເຂດແດນຕິດຈອດກັບບ້ານຕົນ;
4. ຢັ້ງຢືນ ການໄດ້ມາຂອງການມະສິດທີ່ດິນ ແລະ ສິ່ງປຸກສ້າງ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນບ້ານຂອງຕົນ;
5. ເກັບກຳຂໍ້ມູນ, ຕິດຕາມການຈັດຕັ້ງປະຕິບັດຂອງໜ້າທີ່ຂອງພະນັກງານ, ເຈົ້າໜ້າທີ່ກ່ຽວກັບວຽກງານການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ແລະ ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ການກວດກາ

**ມາດຕາ 22 ອົງການກວດກາ**

ອົງການກວດກາພາຍໃນແມ່ນອົງການກວດກາດຽວ ກັບອົງການຄຸ້ມຄອງທີ່ກຳນົດໄວ້ ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ປະຈຳພາກ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ແຕ່ລະພາກສ່ວນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.

**ມາດຕາ 23 ເນື້ອໃນກວດກາ**

ເນື້ອໃນກວດກາມີດັ່ງນີ້:

1. ກວດກາການປະຕິບັດກົດໝາຍ, ນະໂຍບາຍ, ຂໍ້ຕົກລົງ, ລະບຽບການ ກ່ຽວກັບການຄຸ້ມຄອງການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ສອດຄ່ອງຂອງບັນດາເມືອງ ແລະ ນະຄອນແຕ່ລະໄລຍະ;
2. ກວດກາປະເພດ, ເນື້ອໃນ ກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ແຕ່ລະປະເພດຂອງທີ່ດິນ;
3. ກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ກວດກາຕາມການສະເໜີ, ການຮ້ອງຂໍຂອງບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 24 ຮູບການກວດກາ**

ຮູບການກວດກາມີ 03 ຮູບການດັ່ງນີ້:

1. ການກວດກາຕາມແຜນປົກກະຕິ;
2. ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ;
3. ການກວດກາແບບກະທັນຫັນ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 25 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຈົດທະບຽນ, ປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ອາດດຳເນີນດ້ວຍຮູບການໃດໜຶ່ງດັ່ງນີ້:

1. ການການໄກ່ເກ່ຍ ຫຼື ປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ;
5. ການແກ້ໄຂທີ່ມີລັກສະນະສາກົນ;

**ມາດຕາ 26 ການໄກ່ເກ່ຍ ຫຼື ປະນີປະນອມ**

ໃນກໍລະນີ ເກີດຂໍ້ຂັດແຍ່ງ, ຄູ່ກໍລະນີສາມາດເຈລະຈາ, ປະນີປະນອມກັນ ຫຼື ໄກ່ເກ່ຍກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 27 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງ ຄູ່ກໍລະນີ ບໍ່ສາມາດໄກ່ເກ່ຍດ້ວຍຮູບການປະນີປະນອມກັນໄດ້, ຝ່າຍໃດຝ່າຍໜຶ່ງມີສິດສະເໜີຕໍ່ອົງການຄຸ້ມຄອງ ຫຼື ອົງການບໍລິຫານ ແຕ່ລະຂັ້ນບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນເປັນຜູ້ ພິຈາລະນາແກ້ໄຂ.

**ມາດຕາ 28 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງ ທີ່ພົວພັນກັບການດຳເນີນທຸລະກິດ, ຄູ່ກໍລະນີສາມາດຮ້ອງຂໍຕໍ່ຄະນະກຳມະການ